ສຳມະນາໃບລານ
ຫົ່ວປະຫາ ຄັ້ງທີ ๑

ຈັນທີ 10-13 ມີນາ 1988
ທີ່ ນະຄອນຫຼວງ ວຽງຈັນ



ກອງປະຊຸມໃຫຍ່
ຄັ້ງທີ ❶

ວັນທີ 10-13 ມີນາ 1988
ທີ່ ນະຄອນຫຼວງ ວຽງຈັນ


ຈັດພິມໂດຍ

ສະຖາບັນຄົ້ນຄວ້າສິລະປະວັນນະຄະດີແຫ່ງຊາດ

1989

ສຳມະນາທິບໄຕ
ຫົ້ວປະຂາ ຄັ້ງທີ ๑

ວັນທີ 10-13 ມີນາ 1988
ທີ່ ນະຄອນຫຼວງ ວຽງຈັນ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ
--------==00==--------

ສະຖາບັນ ວິທະຍາສາດ
ສັງຄົມ ແຫ່ງຊາດ.

/ລທ ທີ 351/

-=0 ຂໍ້ຕົກລົງພົ້ມປັ້ມ ທີ່ເປັນພົນງານຂອງ 0=-
ສະຖາບັນຄົ້ນຄວ້າສິລະປະວັນນະຄະ
ດີແຫ່ງຊາດ.

****

ເພື່ອປະຕິບັດຕາມແຜນການ ການຄົ້ນຄວ້າ ແລະ ການຮ່ວມມືຊ່ວຍເຫຼືອຈາກກອງຫົ້ນ-
ໂຕໂຍຕາ ໃຫ້ໄດ້ຕາມແຜນການ ທີ່ທາງສະຖາບັນດົ່ງກ່າວໄດ້ເຊັນສັນຍາ ໃຫ້ປະກົດຜົນເປັນຈິງ.

I.- ສະຖາບັນວິທະຍາສາດສັງຄົມແຫ່ງຊາດ ຈົ່ງຕົກລົງພົ້ມປັ້ມຕ່າງໆ ຈຳນວນ 4 ຫົວ,
ເຊິ່ງມີຜູ້ຮັບຜິດຊອບດົ່ງລຸ່ມນີ້ :

1/- ພົ້ມພົນງານການແປ ນິທານພົ້ນເມືອງ ຍີ່ປຸ່ນ 1 ຫົວ ຈຳນວນ 2.000 ສະບັບ.
ໂດຍແມ່ນ ສ/ທ ຫຸມພັນ ລັດຕະນະວົງ ຫົວໜ້າສະຖາບັນສິລະປະວັນນະຄະດີແຫ່ງຊາດ ເປັນ
ຜູ້ຮັບຜິດຊອບ

2/- ພົ້ມພົນງານການສຳມະນາໜັງສືໃບລານທົ່ວປະເທດດົ່ງທີ່ I ຈຳນວນ 1 ຫົວ
2.000 ສະບັບ. ໂດຍແມ່ນ ສ/ທ ຄຳແພງ ເກດະວົງ ເປັນຜູ້ຮັບຜິດຊອບ

3/- ພົ້ມນິທານພົ້ນເມືອງລາວ 2 ຫົວ, ຈຳນວນ 4.000 ສະບັບ, ໂດຍແມ່ນ ສ/ທ
ກິແດງ ພອນກະເສີມສຸກ ເປັນຜູ້ຮັບຜິດຊອບ

4/- ພົ້ມປັ້ມລາຍລາວພົ້ນເມືອງ 2 ຫົວ, ຈຳນວນ 4.000 ສະບັບ, ໂດຍແມ່ນ ສ/ທ
ປຶດາ ເປັນຜູ້ຮັບຜິດຊອບ

II.- ໃຫ້ຜູ້ຮັບຜິດຊອບແຕ່ລະໂຄງການດົ່ງກ່າວຂ້ົນພົ້ນນຳໂຮງພົ້ມ ຕາມເງື່ອນໄຂຫົ້ນ-
ຮອນການຊ່ວຍເຫຼືອທີ່ໄດ້ຕົກລົງກັນແລ້ວນັ້ນຕາມເໝາະສົມຂອງແຕ່ລະໂຄງການຂອງ
ໃຜລາວ.

ວຽງຈັນ, ວັນທີ 16/11/1988

ປະທານສະຖາບັນວິທະຍາສາດ

ສີຊະນະ ສີສານ

ຄະນະຈັດພິມ

* ຣິບໂຣມ ແລະ ວິເຄາະບົດ	:	- ຄຳຜາ ກອດຕະວົງ
* ອ່ານກວດກາຄືນ	:	- ກິແດງ ພອນທະສົມສຸກ
* ພິມດີດ	:	- ວຽງສະຫວັນ ວົງສີຫາລາດ ແລະ ຄຳສະຫມອນ
* ອອກແບບ - ແຕ້ມຮູບໜ້າປົກ	:	- ບຸນທ່ຽງ ສີລປະພັນ ປູ່ດາ ສະຫວັດວົງ

ອຸປະຖຳໂດຍ
ກອງທຶນໂຕໂຢຕາ, ຍີ່ປຸ່ນ

SUPPORTED BY

TOYOTA FOUNDATION, JAPAN

ຄຳນຳ

ໜັງສືໃບລານ ແລະໜັງສືເກົ່າແກ່ປະເພດຕ່າງໆ ເຊັ່ນ : ໜັງສືທີ່ຂຽນໃສ່ເຈ້ຍ ສາ ຫລາບເງິນ ຫລາບທອງ ຫລາບຄຳ ໄມ້ ບ້ຽງຈຸ່ມ ຫົມ (ສີລາຈາລຶກ) ອິດ ຝາປະ ທາຍ... ແລະອື່ນໆ ນັ້ນ ລ້ວນແຕ່ເປັນຂອງມີຄ່າຢ່າງມະຫາສານ ເປັນມໍລະດົກ ທາງວັນນະ ກຳ ວິທະຍາສາດ ອັກສອນສາດ ພາສາສາດ ສິລະປະ ແລ່ະ ປະຫວັດສາດ ເຊິ່ງ ປູ່ຍ່າຕາ ນາຍຂອງພວກເຮົາໄດ້ສືບທອດ ແລະ ຖ່າຍທອດກັນມາຈົນເຖິງຮຸ່ນເຮົາ ອັນຄວນແກ່ການ ຮຸດ ຄົ້ນ ປົກປັກຮັກສາ ຄົ້ນຄວ້າ ແລະສືບທອດກັນຕໍ່ໄປຢ່າງຈິງຈັງ ບໍ່ສະນັ້ນແລ້ວ ສົມບັດອັນລ້ຳຄ່າ ຂອງພວກເຮົາທາງດ້ານນີ້ ຄົງຈະສູນຫາຍໄປເທື່ອລະເລັກລະນ້ອຍ ຢ່າງແນ່ນອນ.

ໂດຍມີຄວາມຫ່ວງໄຍໃນເລື່ອງນີ້ເປັນຢ່າງດີ ອະດີດສະຖາບັນຄົ້ນຄວ້າສິລະປະ ວັນ ນະຄະດີແຫ່ງຊາດ ຂອງກະຊວງວັດທະນະທຳ ເຊິ່ງປັດຈຸບັນ ເປັນສູນຄົ້ນຄວ້າ ສິລະປະວັນນະ ຄະດີ ແລະວັກສອນສາດ ຂອງສະຖາບັນວິທະຍາສາດສັງຄົມແຫ່ງຊາດ ພ້ອມດ້ວຍກົມຫໍສະໝຸດ ແລະວັດທະນະທຳມະຫາຊົນ ຂອງກະຊວງວັດທະນະທຳ ເຊິ່ງປັດຈຸບັນ ເປັນກົມ ວັດທະນະທຳ ຂອງກະຊວງສຶກສາ ແລະ ວັດທະນະທຳໄດ້ຈັດການສຳມະນາທົ່ວປະເທດ ເພື່ອ ປົກປັກຮັກສາ ໜັງສືໃບລານ ແລະໜັງສືເກົ່າແກ່ປະເພດຕ່າງໆຂຶ້ນ ແຕ່ວັນທີ 10-13/3/83 ເຊິ່ງໃນນັ້ນ ມີຜູ້ຕາງໜ້າພະສົງ ທຸກໆ ແຂວງໃນທົ່ວປະເທດ ຜູ້ຕາງໜ້າພະແນກວັດທະນະທຳຂອງແຂວງ ຜູ້ຊ່ຽວຊານວຸດທິ ທາງວັດທະນະທຳ ແລະຜູ້ຕາງໜ້າອົງການທີ່ມ່ວນກ່ຽວຂ້ອງຕ່າງໆ ຂຶ້ນສູນ ກາງ 80 ກ່ວາທ່ານເຂົ້າຮ່ວມ. ແຂກຕ່າງປະເທດ ເຊັ່ນ ທ່ານ ສາສະດາຈານ ໂຢເນໂອ ອຊ ແຫ່ງ ມະຫາວິທະຍາໄລກຽວໂຕ ປະເທດຍີ່ປຸ່ນ ແລະ ທ່ານ ສາສະດາຈານ ແບັກນາກ ເກ ແຫ່ງສູນຄົ້ນຄວ້າ ຄົ້ນຄວ້າວິທະຍາສາດແຫ່ງຊາດຂອງຝະລັ່ງ ກໍໄດ້ຮັບກຽດ ເຊີນເຊີນໃຫ້ ເຂົ້າຮ່ວມດ້ວຍ.

ການສຳມະນາຄັ້ງນີ້ ນັບເປັນຄັ້ງທຳອິດ ໃນປະຫວັດສາດຂອງລາວ ມີໜ້າທີ່ສຳ ຫລວດ ເກັບກຳ ແລະ ລາຍງານສະພາບຄວາມເປັນມາຂອງໜັງສືໃບລານ ໃນປະຫວັດສາດ ຂອງຊາດລາວ ຮັບຮູ້ພາລະບົດບາດ ໜ້າທີ ແລະ ຄຸນປະໂຫຍດຂອງມັນ ໃນການ ກໍ່ສ້າງສັງ

ຄົນລາວ ແລະ ກຳມະວິທີເບອງຕົນ ໃນການປົກປັກຮັກສາໜ້າສີ ປະເພດນີ້ໃຫ້ປອດໄພ.

ຄວາມສຳເລັດຂອງການຈັດການສຳມະນາຄັ້ງນີ້ ມີຄວາມສຳຄັນ ແລະຄວາມໝາຍຢ່າງໃຫຍ່ຫລວງ ເຮັດໃຫ້ເຈົ້າໜ້າທີ ທີ່ສ່ວນກ່ຽວຂ້ອງວິຊາການຕ່າງໆ ພະສົງ ອົງຄະເຈົ້າ ແລະ ປວງຊົນລາວທັງຊາດ ມີສະຕິ ຄວາມຮັບຜິດຊອບສູງຂຶ້ນ ໃນການປົກປັກຮັກສາມໍລະດົກອັນລ້ຳຄ່າຂອງຊາດຕົນ. ມັນເປັນການສ້າງເງື່ອນໄຂອັນຈຳເປັນ ແລະອຳນວຍ ຂຶ້ນພື້ນຖານເບອງຕົນ ເພື່ອການລົງສຳຫລວດ ແລະ ຂຶ້ນບັນຊີໜ້າສີໃນລາມທົ່ວປະເທດ ໃນຂັ້ນຕໍ່ໄປ ຊຶ່ງທາງກະຊວງສຶກສາ-ວັດທະນະທຳ ຈະດຳເນີນອົກຕໍ່ວ່ອງໄວ.

ການສຳມະນາຄັ້ງນີ້ ຈະປະສົບຄວາມສຳເລັດໄດ້ ກໍເນື່ອງຈາກການໃຫ້ ການສະໜັບສະໜູນ ອັນຊຸຈາກອະດີດກະຊວງວັດທະນະທຳ ແລະການໃຫ້ການຊ່ວຍເຫລືອອັນຊຸ ຈາກທ່ານ ໂຕໂຍ້ຕ້າ ເຊິ່ງພວກເຮົາ ຂໍສະແດງຄວາມຮັບບຸນຄຸນ ແລະ ຄວາມຂອບໃຈ ມະໂອກາດນ້ອຍ.

ພວກເຮົາຂໍສະແດງຄວາມຂອບໃຈນຳ ຄະນະປົກຄອງແຂວງຕ່າງໆ ໃນທົ່ວປະເທດ ຂໍຄາລະວະ ນ້ອມນະມັດສະການ ອະນຸໂມທະນາ ນຳອົງການພຸດທະສາສະໜາສຳພັນ ແຫ່ງປະເທດລາວ ຂໍຂອບໃຈນຳພາກສ່ວນຕ່າງໆ ທີ່ໄດ້ໃຫ້ຄວາມສຳຄັນ ແລະການຮ່ວມມືເປັນຢ່າງດີ ແກ່ພວກເຮົາ ອັນເປັນການປະກອບສ່ວນທີ່ສຳຄັນ ເຮັດໃຫ້ການສຳມະນາຄັ້ງນີ້ປະສົບຄວາມສຳເລັດ.

ວຽງຈັນ.....

ສະຖາບັນຄົ້ນຄ້ວາສິລະປະວັນນະຄະດີແຫ່ງຊາດ

Le premier séminaire sur les manuscrits sur feuille de latanier a eu lieu du 10 au 13 Mars 1988 à Vientiané. Ont participé au séminaire des représentants des services provinciaux de la culture, des représentants d'Union provinciale de Bouddhistes Lao et des représentants de diverses institutions directement ou indirectement concernées dans le domaine de la culture à l'échelon centrale, au total plus de 80 personnes. Le ministre de la culture ainsi que le Vénérable Président de l'Union Nationale des Bouddhistes Lao ont honoré le séminaire de leur Présence.

L'objectif majeur de ce séminaire est de sensibiliser l'opinion publique aux problèmes pressants de l'heure que sont la préservation méthodologique et d'utilisation des manuscrits anciens ainsi que leur transmission en tant que patrimoine culturel national.

Les manuscrits appelés communément "Nàngsu Baïlane" manuscrit sur feuille de latanier, sont plus de simples feuille d'une variété de palme sur laquelle nos scripts avec leur stylet, aprés une préparation complexe mais méthodique ont gravé toutes les connaissances religieuses et profanes telles les formules et traités médicaux, des chants et l'histoire des toutes activités sociales en sommes toutes les connaissances culturelles depuis le temps le plus reculé jusqu'à nos jours. On dénombre approximativement à 1600 titres importants de manuscrits et, estimes à peu près 1500-1600 copies de toutes dates depuis le commencement à la fin du Lanxang et même jusqu'aux débuts du Laos modernes. L'origine du Baïlane est lointaine puisqu'au 3ème concil bouddhique (3ème siècle Av.JC), on aurait fait part d'enregistrement de l'enseignement du Bouddha sur les feuilles de latanier, au 8ème siècle HiunTsang et 13è Tcheou-Takouan ont fait mention de cette pratique à Souvannaphoum c'est-à-dire l'Indochine actuelle (Ref. les Etats Indonisés de l'Indochine p.388..).

Les manuscrits de Baïlane sont en somme nos livres d'Antan. Comme son nom Baïlane ne l'indique, la feuille de latanier est presque le seul matériel pour écrire ou plutôt graver les connaissances surtout d'enseignements religieux. Cependant il y a d'autres matériaux dont l'écorce d'arbres la plupart de bambou et surtout de papier lao appelé "Chièsa" est aussi en usage dans le nord du pays. Celui-ci est similaire à celui que dans nos pays voisins, les Thai appelent "Samukhloy" et que les Khmers désignent par "Klan". Il est encore un matériau qu'on ne peut se passer de

mentionner qu'est la peau d'animal (Nàng) que le nom de caractère lao doit son nom (Toinàngsu) et qu'un autre nom Baïlane ou manuscrits doit aussi son nom "Nàngsu". En plus il nous faut mentionner d'autre matériaux sur lesquels les anciens se sont servi pour écrire: Ce sont les dalles de pierres les plaques métalliques, des terres cuites.... Toutefois la majorité de matériaux utilisés pour l'enregistrement des connaissances est encore largement de Baïlane (feuille de latanier).

Quant à la préservation de manuscrits elle se fait de plusieurs manières:

1. Préservation en général dans la pagode en liasse (Phuk) entre 2 planches de contraint appelé "Maypakap" accroché sur le mur ou placé dans l'armoire appelée "Viengkèo".

2. Préservation dans un "Autel ou Palais" spécial pour manuscrits appelé Hotaï qui vient d'un mot composé lao-pali (Ho= autel ou Palais) et Tai (Tripitaka = Trois corbeilles) nombre de répartition de canons bouddhiques: le manuscrit serait soigneusement enveloppés de couverture spécifique appelé "Khamphi" et placé dans un coffre en bois précieux appelée "Hibnàngsu" et orné de motifs décoratifs qu'on peut voir l'importance du maniscrit et sa place dans l'activité sociale et culturelle dans le passé.

3. Préservation par "couverture sacro-sainte":C'est une mobilisation psychologique;en effet les manuscrits quels qu'ils soient sont considérés comme sacrés qu'il faut soulever audessus de la tête en signe de respect avant de lire;au moment de lire il faut le placer sur un plateau ou sur un récipient quelconque mieux en matière précieuse plus haut que la hanche du lecteur assis; pour le porter il faut le couvrir de khamphi et le porter sur l'épaule comme le port d'arme ou de drapeau national;le toucher sans faire signe de respect serait atteint de "péché"etc... Bref il faut le bien garder.

En plus la diffusion est fait par recopiage appelé "Sang Nàngsu" littéralement signifie "édifier ou construire en manuscrit"; par ces termes on peut voir nos anciens attachent une très grande importance en cette activité et c'est encore une mobilisation psychologique.

Faire recopier (Sang) le manuscrit aurait donné le plus de Boun "félicité" plus que celui qui écrit (copie),que celui qui l'améliore,que celui qui lit et celui qui écoute attentivement la lecture.

Cette Auguste occasion de "faire construire le manuscrit" donnē lieu à une fête appelée "Slong Nangsu" (commémoration) du manuscrit qui donne lieu à une cérémonie assez complexe qu'il faut et qu'il existe un guide pratique appelé aussi par le même nom consacré "Sang Nàngsu"; et celui ou celle qui eut l'occation d'en faire est considéré comme d'avoir accompli une bonne naissance dont le nom de l'heureuse bonne née et celui du copieur sont la plupart inscrit à la fin des manuscrit au lieu et place de leurs auteurs même, et c'est ce qui nous sont parvenus et la pluplart les manuscrits la plupart du temps jusqu'à nos jours.

En somme la sacralité des manuscrits et le recopiage sont deux méthodes indirectes de préservation qui sont quelque peu profanes et qui constituent cependant durant des siècles une couverture,disons,"sacro-sainte" pour le manuscrit de jadis; il nous reste naguère dans l'atmosphère nouvelle une méthodologie nouvelle de préservation que sont le rescencement, l'inventaire, la conservation, et enfin la rétransmission en tant que patrimoine culturel national.C'est ce dont ce premier seminaire national a tenté de concrétiser dans le faits en présentant des documents de fonds suivants:

1er Document: Rapport général au séminaire qui met en relief les problèmes généraux et urgents relatifs aux manuscrits.

2ème Historique des caractères et de manuscrits qui retrace l'évolution des caractères et leur support matériel en général et nos caractères et les matériaux en usage dans notre pays.

3ème Le document "Les Bonzes et les manuscrit" rappelle que les manuscrits étaient l'oeuvre quasi exclusive des bonzes avec leur rôle prédominant dans la communauté de jadis.

4ème Le document "Méthodologie dans le rescencement, l'inventaire et l'utilisation" met "en situ" les problèmes et les techniques relatifs aux manuscrits.

5ème Le seminaire a passé en revu les interventions et point de vue des représentants des institutions qualifiées et des personnalités notamment Mr le professeur Yonéro Ishii de l'Université de Kyoto (Japon),du président de la commission national lao pour l'Unesco ainsi que les allocutions d"ouverture et de cloture du ministre de la culture.

Pour essayer de faire une présentation rationnelle du rapport du séminaire nous avons proposé un plan de façon suivante:

I^{ère} Partie: Documents soumis au séminaire.
II^{ème} Partie: Rapports des provinces.
III^{ème} Partie: Inventaires précédents et Essai d'exploitation.

La 1ère partie pourrait présenter des désirata, le leitmotiv et des objectifs du sémiaire, la 2ème pourrait mettre en relief des problèmes et situations au "chantier" où dépend l'echec ou le succès du projet; la 3ème shématise les problèmes déjà résolus et ceux restés en suspens.

C'est donc un public alerté, des problèmes canalisés et encadrés et sur' "terrain battu" que se déroulerait les prochains rescensement, l'inventaire, la préservation de manuscrits; et l'adage "un travail bien préparé est déjà moitié fait" serait-il cette fois fait l'exception à la règle ?

Vientiane, le 1er Mars 1989
Centre de Recherche Artistique et Littéraire et (Crall)

ສາລະບານ

ພາກໜຶ່ງ : ເອກະສານສະເໜີກອງປະຊຸມ

	ໜ້າ
1.- ລາຍການປະຊຸມສຳມະນາໃບລາມ 1988	1
2.- ບັນຊີລາຍຊື່ຜູ້ແທນເຂົ້າຮ່ວມປະຊຸມ	4
3.- ຄຳປາໄສກ່າວໄຂພິທີກອງປະຊຸມຂອງທ່ານຮອງ ລັດຖະມົນຕີກະຊວງວັດທະນະທຳ	8
4.- ບົດລາຍງານສະເໜີກອງປະຊຸມ	12
5.- ບົດສະເໜີ ຕົວອັກສອນ ແລະ ໜັງສືໃບລາມ	30
6.- ບົດສະເໜີ "ພະສິງ ແລະ ໃບລາມ"	43
7.- ບົດຄຳເຫັນຂອງທ່ານສາດສະດາຈານ ໂຢເນໂອະອຸອ	58
8.- ເອກະສານເຜີຍແຜ່ຄຳລັດຕ່າງໆສະໜຸດທ້ອງຖິ່ນ	77
9.- ບົດສະເໜີ ວິທະຍາວິທີການສຳຫລວດຂຸມບັນຊີ, ປົກປັກຮັກສາ	88
10.- ບົດຄຳເຫັນຂອງຜູ້ຕາງໜ້າ ອ.ພ.ສ.	105
11.- ຄຳເຫັນຂອງຜູ້ຕາງໜ້າ ອ.ຄ.ວ	111
12.- ບົດແຈ້ງການຂອງກອງປະຊຸມ	115
13.- ບົດໂອ້ລົມ ປິດພິທີ ທ່ານລັດຖະມົນຕີກະຊວງວັດທະນະທຳ	122

ພາກສອງ : ບົດລາຍງານຈາກແຂວງຕ່າງໆ (ທ້ອງຖິ່ນ)

14.- ບົດລາຍງານ ແຂວງ ບໍ່ແກ້ວ	130
15.- ບົດລາຍງານ ແຂວງ ອຸດົມໄຊ ແລະ ຫົວພັນ	132
16.- ບົດລາຍງານ ແຂວງ ຫລວງພະບາງ	133
17.- ບົດລາຍງານ ແຂວງ ໄຊຍະບູລີ	138
18.- ບົດລາຍງານ ແຂວງ ວຽງຈັນ	142

ໜ້າ

19.- ບົດລາຍງານ ກຳແພງມະຫອນອ້ອງຈັນ 148
20.- ບົດລາຍງານ ແຂວງ ບໍ່ລິຄຳໄຊ 155
21,- ບົດລາຍງານ ແຂວງ ຄຳມ່ວນ 161
22.- ບົດລາຍງານ ແຂວງ ສະຫວັນນະເຂດ 166
23.- ບົດລາຍງານ ແຂວງ ສາລະວັນ 176
24.- ບົດລາຍງານ ແຂວງ ຈຳປາສັກ 178

ພາກສາມ : ຜົນການສຳຫລວດຜ່ານມາ ແລະ ບາງຄວາມເຫັນ

25.- ປະຫວັດການສຳຫລວດ ແລະ ຮ້ົ ຂົ ມ ບັ ມ ຊ ຜ່ານມາ 193
26.- ການສຳຫລວດ ແລະ ຮ້ົ ຂົ ມ ບັ ມ ຊ ປີ 1900 ໂດຍ ເຈົ້າ ຈົດຕະລາດ 200
27.- ການສຳຫລວດ ແລະ ຮ້ົ ຂົ ມ ບັ ມ ຊ 1912 ທີ ຄຳມ່ວນ 203
28.- ການສຳຫລວດ ແລະ ຮ້ົ ຂົ ມ ບັ ມ ຊ ປີ 1914 ໂດຍ ເຈົ້າ ເພັດຊະຣາດ 204
29.- ການ ຮ້ົ ຂົ ມ ບັ ມ ຊ ປີ 1917 ໂດຍ ທ່ານ ລູຍຟີໂນ (ຄະນະວັນນະຄະດີ 1958) 207
30.- ການ ຮ້ົ ຂົ ມ ບັ ມ ຊ (1932-36 ?) (ຄະນະກຳມະການວັນນະຄະດີ 1960).. 261
31.- ການສຳຫລວດ ແລະ ຮ້ົ ຂົ ມ ບັ ມ ຊ ໜັ ງ ສ ປີ 1958 ?(ທ່ານ ລາຟ). 284
32.- ບັ ມ ຊ ໜັ ງ ສ ວ ນ ມ ະ ຄ ະ ດ (ລາ ຊ ະ ບັ ນ ດ ສ ະ ພ າ ສ າ ດ) 1973 403
33.- ຂ ອ ບ ເ ຂ ດ ກ ານ ຂ ະ ຫ ຍ າ ຍ ຂ ອ ງ ໜ ັ ງ ສ ວ ນ ມ ະ ຄ ະ ດ ແ ຫ ່ ງ ປ ະ ຫ ວ ັ ດ ສ າ ດ..... 452
34.- ເ ລ ື ອ ງ ໃ ນ ລ ະ ດ ັ ບ ທ ີ ໜ ຶ ງ ຂ ອ ງ ໜ ັ ງ ສ ແ ຫ ່ ງ ປ ະ ຫ ວ ັ ດ ສ າ ດ ຂ ອ ງ ເ ຂ ດ 471
35.- ລ ັ ກ ສ ະ ນ ະ ທ ່ າ ອ ຽ ງ ວ ັ ດ ທ ີ ໜ ັ ງ ສ ັ ນ ອ ຍ 483



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ

ກະຊວງວັດທະນະທຳ
ຄະນະຈັດຕັ້ງກອງປະຊຸມສຳມະນາ
ໃບລານທົ່ວປະເທດຄັ້ງທີ່ 1

ເລກທີ 01/ວທ-ບລ.

ແຜນການເຄື່ອນໄຫວກອງປະຊຸມສຳມະນາ
ໃບລານທົ່ວປະເທດຄັ້ງທີ 1 (ແຕ່ວັນທີ 9/15/3/88)
ທີ່ວຽງຈັນ.

---

1. ວັນພຸດ /9/3/88 ຕ້ອນຮັບຜູ້ແທນ (ໜົດ)
2. ວັນພະຫັດ 10/3/88
   ເວລາ 8.30. ມ. ກອງປະຊຸມສຳມະນາເລີ່ມໄຂເປັນທາງການ.
   - ທ່ານຮອງລັດຖະມົນຕີກະຊວງວັດທະນະທຳກ່າວເປີດ ພິທີ .
   ເວລາ 14.00 ມ. - ບົດລາຍງານສະພາບໜັງສືໃບລານ ແລະໜັງສືອື່ນໆ ຕັ້ງແຕ່ກ່ອນເຖິງປັດຈຸບັນ ແລະຮ່ວໄຫຼກະແຈກກະຈາຍຢູ່ຕ່າງປະເທດ.
   (ໂດຍ ທ່ານໝຸນພັນ ລັດຕະນາວົງ).
3. ວັນສຸກ 11/3/88
   ເວລາ 8.30 ມ. - ຄວາມເປັນມາຂອງຕົວອັກສອນໃສ່ວັດຖຸຕ່າງໆ ຄວາມໝາຍຄວາມສຳຄັນແລະຄຸນປະໂຫຍດຂອງຕົວໜັງ ສືໃບລານ ,ແລະ ໜັງສືປະເພດຕ່າງ ໆ.
   (ໂດຍທ່ານ ສຳລິດ ບົວສີສະຫວັດ).
   - ຄຳເຫັນພະສົງກັບໜັງສືໃບລານ (ໂດຍ ທ່ານ ອຸ ຈານທອງຄູນ ອະນັນຕະສຸນທອນ ປະທານ ອພສແຫ່ງ ປະເທດລາວ).

ເວລາ 14.00 ມ. ບົດປາຖະກະຖາຂອງສາສະດາຈານ ໂຢໂນໂອະ ອຸ່ສ ຜູ້ອຳ
ນວຍການສູນຄົ້ນຄວ້າປະຫວັດສາດອາຊີອາຄະເນແຫ່ງມະຫາ
ວິທະຍາໄລກຽວໂຕປະເທດຍີ່ປຸ່ນ.

- ເຜີຍແຜ່ດຳລັດວ່າດ້ວຍການສ້າງຕັ້ງຫ້ສະໜຸດ ຢູ່ຫ້ອງຖ່ໍ
(ໂດຍທ່ານ ອຸດົມສະຫວັນ ແກ້ວມະນີວົງ).

ເວລາ 19.00 ມ. ຊົມວີດີໂອ (ເລື່ອງບຸນມະໂຫລານສົ່ລະປະພົ້ນເມືອງ 1986)
ທີ່ຫ້ອງປະຊຸມ.

4. ວັນເສົາ 12/3/88

ເວລາ 8.30 ມ. - ວິທະຍາການວ່ົ້ດ້ົ້ນຄວ້ົ້ວ້ົ້ນ ຸ ຸ ຸ

ເວລາ 14.00 ມ. - ບົດໂອ້ລົມຂອງທ່ານທອງສິງ ທຳມະວົງ ລັດຖະມຸນຕີກະ
ຊວງວັດທະນະທຳ ກາວໃນໂອກາດສຳມະນາໜັງສືໃບລານ
ທົ່ວປະເທດຄັ້ງທີ 1.

6. ວັນຈັນ 14/3/88
ເວລາ 8.30 ມ. ເປັນຕົ້ນໄປຈັດສັງສັນຢູ່ ທ່າລາດ (ໜ້ົ).
7. ວັນອັງຄານ 15/3/88
- ເຊ່ົ່ ຄະນະຜູ້ແທນຕ່າງແຂວງກັບທ້ອງຖ່ິ.

ວຽງຈັນ, ວັນທີ 18/2/88.

ປະທານ ກອງປະຊຸມສຳມະນາໃບລານທົ່ວປະເທດ
ທ້ອໜ້າ ສະຖາບັນຄົ້ນຄວ້າ ສິລະປະວັນນະຄະດີແຫ່ງຊາດ.

ໝຸນພັນ ລັດຕະນະວົງ.

ລາຍຊື່ ທ່ານຜູ້ແທນທີ່ຂໍ້ຮ່ວມ :

ໃນກອງປະຊຸມສຳມະນາໜັງສືໃບລານຊຸດທີ 1 ຊຶ່ງເລີ່ມແຕ່ວັນທີ 10-13-3/88:

1. ທຸ້ນ ທອງສີ ທຳມະວົງ ລັດຖະມຸນຕີ ກະຊວງວັດທະນະທຳ ກຳມະການສູນກາງພັກ
2. ທ້ານ ໂສມສີ ເດຊາລຳພູ ຮອງລັດຖະມຸນຕີ ກະຊວງວັດທະນະທຳ ປະທານຂອງສຳມະ ນຸກໃບລານ.
3. ທຸ້ນ ຄຳພັນ ວໍລະຈິດ (ຄະນະກຳມະການຄົ້ນຄວ້າປະຫວັດສາດຂອງພັກ).
4. ທຸ້ນ ອາຈານ ພູ ຣາຊຸພົນ (ສະຖາບັນຄົ້ນຄວ້າວິທະຍາສາດສຶກສາ).
5. ທ້ານ ດຣ. ເພັ້ຍພັນ ເຫງົ້າສີຫວັດ ຊ່ຽວຊານດ້ານປະຫວັດສາດ (ກະຊວງການຕ່າງ ປະເທດ).
6. ທຸ້ນ ຄຳເພົາ ພອນແກ້ວ ຄະນະກຳມະການ ອຸ ຍ ສໂກເພື່ອຊາດລາວ
7. ທ້ານ ດ.ຣ ສີຄຳຕາດ ປະທານສະພາວິທະຍາສາດ (ມະຫາວິທະຍາໄລສ່າງຄູ ດົ ງ ໂດ ກ ວຽງຈັນ).
8. ທຸ້ນ ດ.ຣ ທອງຄຳ ,ອ ອ ນ ມະນີ ສ ອ ນ (ສະຖາບັນຄົ້ນຄວ້າວິທະຍາສາດສັ ງ ຄົ ມ)
9. ທຸ້ນ ອາຈານ ທອງຊຸ ນ ລາດວົງສາ (ມະຫາວິທະຍາໄລສ່າງຄູ ດົ ງ ໂດ ກ ວຽງຈັນ)
10. ທຸ້ນ ອາຈານ ມຸນຕີ (ມະຫາວິທະຍາໄລສ່າງຄູ ດົ ງ ໂດ ກ ວຽງຈັນ)
11. ທຸ້ນ ວິໄລທອງ (ສຳນັກງານສະພາລັດຖະມຸນຕີ)
12. ທຸ້ນ ບຸ ນ ເພັ ງ ຄະນະກຳມະການບັນດາເຜົ່າ)
13. ທຸ້ນ ນາງ ດ.ຣ ມະຍູລີ ເຫງົ້າສີຫວັດ (ກະຊວງການຕ ກ ງ ປະ ເ ທ ດ)
14. ທຸ້ນ ສົ ມ ເ ທ ເພັ ນ ມ ີ (ຫ ອ ງ ກ ານ ກ ະ ຊ ວ ງ ວ ັ ດ ທ ະ ນ ະ ທ ຳ)
15. ທຸ້ນ ບຸ ນ ມ າ ດ າ ຣ າ ແ ສ ງ (ກົ ມ ຈ ັ ດ ຕັ ້ ງ ແ ລ ະ ກ ໍ ສ າ ງ ພ ະ ນ ັ ກ ງ ານ ກ ະ ຊ ວ ງ ວ ັ ດ ທ ະ ນ ະ ທ ຳ)
16. ທຸ້ນ ສົ ມ ສ ີ ສ ີ ອ າ ໄ ພ (ກ ົ ມ ແ ຜ ນ ກ ານ - ກ ານ ເ ງ ິ ນ ກ ະ ຊ ວ ງ ວ ັ ດ ທ ະ ນ ະ ທ ຳ)
17. ທຸ້ນ ຄຳ ສ ັ ງ ສ ຸ ນ ດ າ ລ າ (ກ ົ ມ ພ ິ ມ ຈ ຳ ໜ ່ າ ຍ ກ ະ ຊ ວ ງ ວ ັ ດ ທ ະ ນ ະ ທ ຳ)
18. ທຸ້ນ ບ ໍ ລ ຍ ົ ມ ສ ີ ລ ັ ນ ໄ ຊ (ກ ົ ມ ຄ ຸ ມ ຄ ອ ງ ກ ະ ຊ ວ ງ ວ ັ ດ ທ ະ ນ ະ ທ ຳ)
19. ທຸ້ນ ມ ຍ ົ ມ ກ ອ ງ ປ ະ ມ ີ (ກ ົ ມ ຮ ູ ບ ປ ັ ້ ນ ກ ະ ຊ ວ ງ ວ ັ ດ ທ ະ ນ ະ ທ ຳ)
20. ທຸ້ນ ບຸ ນ ລ ັ ບ ແ ກ ວ ສ ັ ນ ຍ າ (ກ ົ ມ ພ ິ ພ ິ ດ ຕ ະ ພ ັ ນ ກ ະ ຊ ວ ງ ວ ັ ດ ທ ະ ນ ະ ທ ຳ)
21. ທຸ້ນ ຄ ຳ ນ ວ ນ ວ ິ ງ ຈ ັ ນ ດ ີ (ກ ົ ມ ຫ ້ ສ ະ ໝ ຸ ດ , ສ ະ ໂ ມ ສ ອ ນ ວ ັ ດ ທ ະ ນ ະ ທ ຳ ນ ະ ທ າ ຈ ິ ນ)
22. ທຸ້ນ ໜຸ ນ ພັ ນ ລ ັ ດ ຕ ະ ວ ົ ງ (ສ ະ ຖ າ ບ ັ ນ ຄ ົ ້ ນ ຄ ວ າ ກ ະ ຊ ວ ງ ວ ັ ດ ທ ະ ນ ະ ທ ຳ)
23. ທ ້ ນ ນ າ ງ ກ ົ ງ ເ ດ ອ ນ ເ ມ ຄ ຕ ະ ວ ົ ງ (ສ ະ ຖ າ ບ ັ ນ ຄ ົ ້ ນ ຄ ວ າ ວ ິ ທ ະ ຍ າ ສ າ ດ ກ ານ ສ ຶ ກ ສ າ)

24. ທ່ານ ພະອາຈານ ສົ໊ວໄຊ ບຸນປະເສີດ (ປະທານ ອ.ພ.ສ ແຂວງຫລວງນ້ຳທາ)
25. ທ່ານ ພະອາຈານ ສົ໊ມ ແກວພຸ໋ທູ (ປະທານ ອ.ພ.ສ ແຂວງບໍ່ແກວ)
26. ທ່ານ ພະອາຈານ ບຸນແພງ (ປະທານ ອ.ພ.ສ ແຂວງຫົ໊ວພັນ)
27. ທ່ານ ພະອາຈານ ຄຳພ໊ົາ ທອງດາຣາ (ປະທານ ອ.ພ.ສ ແຂວງວຽງຈັນ)
28. ທ່ານ ພະອາຈານ ທອງລັດ ຈັນທະປັນຍາ (ຮອງປະທານ ອ.ພ.ສ ແຂວງ ບໍ່ລ໊ິ ຄຳໄຊ).
29. ທ່ານ ພະອາຈານ ບົ໊ວລຽນ ຈັນທະວົ໊ງ (ປະທານ ອ.ພ.ສ ແຂວງຄຳ໊ມ່ວນ)
30. ທ່ານ ພະອາຈານ ມະຫາວຽນ ສຸ໊ລ໊ວົ໊ງ (ຄະນະ ອ.ພ.ສ ແຂວງສະຫວັນນະເຂດ)
31. ທ່ານ ພະອາຈານ ສົ໊ມພອນ ພົ໊ມມະຫ່ຳໄຊ (ປະທານ ອ.ພ.ສ ເມ໊ືອງຈັນທະບູລ໊)
32. ທ່ານ ພະອາຈານ ສຸ໊ບົ໊ນ ສຸຊາດາວົ໊ງ (ປະທານ ອ.ພ.ສ ເມ໊ືອງສ໊ີໂຄດ)
33. ທ່ານ ພະອາຈານ ສຸ໊ຣະເພ໊ີຍ ສະຂຸຽນ (ປະທານ ອ.ພ.ສ ເມ໊ືອງສ໊ີສັດຕະນາກ)
34. ທ່ານ ພະອາຈານ ບົ໊ວຄຳ ບຸພາວົ໊ງ (ຄະນະ ອ.ພ.ສ ກຳແພງນະຄອນ).
35. ທ່ານ ພະອາຈານ ມັນທາ ໄຊຍະວົ໊ງ (ປະທານ ອ.ພ.ສ ເມ໊ືອງໄຊເສດຖາ)
36. ທ່ານ ບຸນເຫ໊ຼືຽມ ແກວ໊ໍໄລ (ແຂວງຫລວງນ້ຳທາ)
37. ທ່ານ ຈານໄຊ (ແຂວງ ອຸ໊ດົມໄຊ)
38. ທ່ານ ທອງຄຳ (ແຂວງອຸ໊ດົມໄຊ)
39. ທ່ານ ສ໊ີແພງ ຈັນມະນ໊ີ (ແຂວງບໍ່ແກວ)
40. ທ່ານ ຈັນສ໊ີ ຈັນມະນ໊ີ (ແຂວງ ຫລວງພະບາງ)
41. ທ່ານ ທອງຈັນ ບົ໊ດທະຈອມ (ແຂວງຫລຸວງພະບາງ)
42. ທ່ານ ທອງຄູນ ແກວຫູວງຫລາ (ເຂດຍອຍເມ໊ືອງປາກລາຍ)
43. ທ່ານ ຄຳສ໊ີງ ຈັນວົ໊ງສາ (ແຂວງຫົ໊ວພັນ)
44. ທ່ານ ຄຳພອນ ອຸນດາຣາ (ແຂວງວຽງຈັນ)
45. ທ່ານ ຈັນຟອງ ທາດາວົ໊ງ (ແຂວງບໍ່ລ໊ິຄຳໄຊ)
46. ທ່ານ ຈັນສະໝອນ (ແຂວງຄ໊ຳ໊ມ່ວນ)
47. ທ່ານ ມະຫາເສ໊ີ ທ໊ຳມະວົ໊ງ (ແຂວງສະຫວັນນະເຂດ)
48. ທ່ານ ບຸນເລ໊ີດ ວົ໊ງຄຳຊາວ (ແຂວງ ຈຳປາສັກ)
49. ທ່ານ ຈານເ໊ມ (ແຂວງສາລະວັນ)
50. ທ່ານ ສົ໊ມໃຈ ສ໊ີປະເສີດ (ແຂວງ ສາລະວັນ)

51. ທ່ານ ຄຳຮຸ່ງ ຈັນທະມຸນມານ (ເມືອງຈັນທະບູລີ)
52. ທ່ານ ນາງ ຈັນດາວົງ ພອນທະວີໄຊ (ເມືອງສີສັດຕະນາກ)
53. ທ່ານ ສຸວັນ ບົວໝາຍວົງ (ເມືອງໄຊເສດຖາ)
54. ທ່ານ ພອນ (ວັດທະນະທຳ ກຳແພງ)
55. ທ່ານ ອານົນດາ ປະຊາໄຊ (ຫໍສະໝຸດແຫ່ງຊາດ)
56. ທ່ານ ພຸດ ຈັນທະວົງ (ກົມວັດທະນະທຳນະຫາຊົນ)
57. ທ່ານ ຄຳແພງ ເກດຕະວົງ (ສະຖາບັນຄົ້ນຄວ້າສົມລະປະວັນນະຄະດີແຫ່ງຊາດ)
58. ທ່ານ ນາງ ດວງເດືອນ ວໍຣະວົງ (ສະຖາບັນຄົ້ນຄວ້າສົມລະປະວັນນະຄະດີແຫ່ງ ຊາດ).
59. ທ່ານ ນາງ ດາຣາ ວໍຣຸະວົງ (ໜັງສືພິມວັນນະສົມ)
60. ທ່ານ ອຸດົມ ສະຫວັນແກນນູວົງ (ກົມວັດທະນະທຳນະຫາຊົນ)
61. ທ່ານ ສະວາ ກຸສິຫາລາດ (ກົມວັດທະນະທຳນະຫາຊົນ)
62. ທ່ານ ນາງ ອຸດຕະຣາ (ສະຖາບັນຄົ້ນຄວ້າສົມລະປະວັນນະຄະດີແຫ່ງຊາດ)
63. ທ່ານ ອຸດສາ (ສະຖາບັນຄົ້ນຄວ້າສົມລະປະວັນນະຄະດີແຫ່ງຊາດ)
64. ທ່ານ ຈັນລາ (ກົມວັດທະນະທຳນະຫາຊົນ)
65. ທ່ານ ສັງທອງ (ສະຖາບັນຄົ້ນຄວ້າສົມລະປະວັນນະຄະດີແຫ່ງຊາດ)
66. ທ່ານ ນາດ ຈັນທິດາ (ກົມວັດທະນະທຳນະຫາຊົນ)
67. ທ່ານ ນາງ ຂັນທະມາລີ (ຫໍສະໝຸດແຫ່ງຊາດ)
68. ທ່ານ ກິແດງ ພອນກະເສີນສຸກ (ສະຖາບັນຄົ້ນຄວ້າສົມລະປະວັນນຸນະຄະດີແຫ່ງຊາດ)
69. ທ່ານ ອົນທຸະລົງສອນ (ສະຖາບັນຄົ້ນຄວ້າສົມລະປະວັນນະຄຸະດີແຫ່ງຊາດ)
70. ທ່ານ ບຸນຫຽງ (ສະຖາບັນຄົ້ນຄວ້າສົມລະປະວັນນະຄະດີແຫ່ງຊາດ)
71. ທ່ານ ຄຳ ວໍຈິດວົງສາ (ສະຖາບັນຄົ້ນຄວ້າສົມລະປະວັນນຸະຄະດີແຫ່ງຊາດ)
72. ທ່ານ ວັນຄຳ (ສະຖາບັນຄົ້ນຄວ້າສົມລະປະວັນນະຄະດີແຫ່ງຊາດ)
73. ທ່ານ ບຸນໝັກ (ສະຖາບັນຄົ້ນຄວ້າ)
74. ທ່ານ ສຸຣິຍັນ ສີແສງລັດ(ສະຖາບັນຄົ້ນຄວ້າ)
75. ທ່ານ ນາງ ຈິດຕາ (ສະຖາບັນຄົ້ນຄວ້າ)
76. ທ່ານ ຄຳຜັນ (ສະຖາບັນຄົ້ນຄວ້າ)
77. ທ່ານ ແໜນ (ກົມວັດທະນະທຳນະຫາຊົນ)

78. ทุ่ม ดำพัฎ (สะถาบันล้มล้วา)
79. ทุ่ม ดำหลา (มีมวัดทะมะทำมะหาอุ่ม)
80. ทุ่ม ดำตัม
81. ทาม สาสะดาจาม โยมโอะ อีสี (สะถาบันล้มล้วาปะหวัดสาดอาอุ อาละมะ).
82. ทุ่ม ด.ธ แบมมากเว (มีกล้มล้วาปะจำสูมล้มล้วาอุยอา 1075 ฝั่ง)
83. ทุ่ม จามอันมา มาสีสันไอ (อุยวอาง)
84. ทุ่ม อูใส (อัดตะปี)
85. ทุ่ม มอย(ห้สะหมุด)
86. ทุ่ม ดำมม (ห้สะหมุด)
87. ทุ่ม มาง แสงพะเม็อง (ห้สะหมุด)
88. ทุ่ม พระกอม บุมผ้ง (อ.พ.ส แขวงพ้งสาลี)
89. ทาม ผ้ง (แขวงพ้งสาลี).

ຄຳປາໄສ ທ່ານຮອງລັດຖະມົນຕີ ກະຊວງ ວັດທະນະທຳ
(ໂສມສີດາ ຈາຄຳພູ) ກ່າວໃນວາລະໄຂກອງປະຊຸມ
ກອງສະມະນາ ໜັງສືໃບລານ ທົ່ວປະເທດ ຄັ້ງ (1)
ວັນທີ 9/3/1988 ທີ່ວຽງຈັນ.

ທ່ານ:

ມື້ນີ້ ຂ້າພະເຈົ້າ ຮູ້ສຶກດີໃຈເປັນຢ່າງຍິ່ງ ທີ່ໄດ້ເຫັນການກະກຽມ ສຳມະນາໜັງສືໃບລານທົ່ວປະເທດ ໄດ້ເກີດຂຶ້ນຢ່າງເປັນທາງການ ໂດຍ ຄວາມພະຍາຍາມ ຂອງ ຄະນະຮັບຜິດຊອບໂຄງການນຸກຂັ້ນ.

ໃນທ່ານກາງຄວາມເບີກບານມ່ວນຊື່ນ ຕໍ່ໄຊຊະນະທີ່ນັກລົບຈາຍແດນທ້ອງຖິ່ນຂອດບ່ແຕນ ແຂວງ ໄຊຍະບູລີ ຍາດແຍ່ງມາໄດ້ ຊຶ່ງໄຊຊະນະນັ້ນ ກໍພວມເປັນຂ່າວດຶກໂດມທົ່ວໂລກ ແລະ ໄຊຊະນະ ພວກເຮົາຖືວ່າເປັນໄຊຊະນະ ຂອງການປະຕິບັດມະຕິ ທີ 5 ສະໄຫມທີ ສອງ ຂອງສູນກາງພັກ ໃນການປະຕິບັດ ສອງໜ້າທີ່ຍຸດທະສາດ ນຳເອົາສັນຕິພາບ ແລະ ຄວາມສຸກມາສູ່ປະຊາຊົນ ນອກຈາກນີ້ ຍັງເປັນໄຊຊະນະລວມຂອງປະຊາຊົນສອງປະເທດລາວ-ໄທ ຢຸດຕິການປະທະກັນ ແລະ ເປັນໄຊຊະນະ ຂອງຜູ້ຮັກຫອມສັນຕິພາບ ແລະ ຄວາມເປັນທຳໃນໂລກ.

ນະໂອກາດນີ້, ຂ້າພະເຈົ້າຂໍຊົມ ບັນດາ ທ່ານຜູ້ແທນທົ່ວຫລາຍ ຕົບມືຊົມເຊີຍໄຊຊະນະດັ່ງກ່າວນັ້ນຢ່າງສຸດອົກສຸດໃຈ.

ຂ້າພະເຈົ້າເຫັນ ແລະ ຮັບຮູ້ຄວາມພະຍາຍາມຂອງພວກທ່ານ ທີ່ໄດ້ເປັນກ້ອນກຳລັງອັນແຂງແຮງ ໃຫ້ແກ່ວຽກນີ້ ຊຶ່ງສະແດງອອກໃຫ້ເຫັນຈາກບັນດາສະຫາຍ ໃນຄະນະຈັດຕັ້ງດຳເນີນກອງປະຊຸມ ໄດ້ຫາງຫາທະຕຽມມາໄດ້ຕັ້ງແຕ່ກາງປີ 1987, ແລ່ນເຕັ້ນພົວພັນ ນຳພາສ່ວນຕ່າງໆທີ່ກ່ຽວຂ້ອງ ຢ່າງກ້ວາງຂວາງ ເຮັດໃຫ້ຄວາມເຂົ້າໃຈກັນ ໃນບັນຫາ ໜັງສືໃບລານ ແລະ ຖືກຮັບຮູ້ກັນດີພໍສົມຄວນ, ບັນດາສະຫາຍຕ່າງໜ້າວັດທະນະທຳ... ຈາກແຂວງທົ່ວປະເທດ ກໍໄດ້ຜ່ານຜ່າອຸປະສັກນາໆປະການ ສົບເສັ້ນທາງຜ່ານຮ່ອມພ້ວຍພູຜາ ກໍໄດ້ເດີນເຕັ້ນມາຮອດບ່ອນຈຸດເຕົ້າໂຮມກັນ ມະສະຖານທີ່, ຂ້າພະເຈົ້າຂໍຖືໂອກາດ ຈຸ່ມ

ເຊີຍຄະນະຮັບຜິດຊອບກອງປະຊຸມ ບັນດາສະຫາຍຜູ້ແທນຕ່າງໆ ແຕ່ລະແຂວງ ທົ່ວປະເທດ ທີ່ໄດ້ຜ່ານຂັ້ນຍຸ້ງຍາກມັ້ນມາຮອດ.

ສະຫາຍນັກລົບ ວັດທະນະທຳທີ່ຮັກແພງ, ປະເທດຊາດຣົ້ານີ້ມູນມັ້ງ ມໍລະດົກທາງດ້ານວັດທະນະທຳປາງຫລວງຫລາຍ ຊຶ່ງສິ່ງເຫລົ່ານັ້ນ ກໍຫາກແມ່ນຫົວຄິດປະດິດສ້າງຂອງຄົນບູຮານລາວເຮົາ ໄດ້ຈົດກ່າຍຖ່າຍທອດໄວ້ໃນໃບລານ ແລະ ວັດຖຸອື່ນໆ... ໃຫ້ແກ່ຄົນຮຸ້ນຫລັງ ແຕ່ນັ້ນໄດ້ຖືກສູນເສຍໄປ ດ້ວຍວ່າປະເທດຊາດສູນເສຍເອກະລາດ ນັບເປັນສອງຮ້ອຍປີກ່ວາ ແຕ່ຍ້ອນຄວາມຮັກຊາດ ຂອງປະຊາຊົນລາວ ບັນດາແນວຄິດ ແລະ ການຕໍ່ສູ້ຂອງຄົນບູຮານ ໄດ້ຖືກຈານໄວ້ໃນໃບລານ ສືບທອດກັນມາຫລາຍຊົ່ວ ຜ່ານມາຫນັງສືໃບລານ ແລະ ສິ່ງຂຽນອື່ນໆເຫລົ່ານັ້ນ ກໍໄດ້ມີຮົ່ມມັດ ແລະປ້ອແປງໄດ້ສ່ອມໃດສ່ອມໜຶ່ງ ຈາກພະສົງ ສາມະເນນ, ຄູບາອາຈານ ແລະຈາກສັດທາສ່ວນບຸກຄົນ ບາງບ່ອນກໍໄດ້ຂຽນບັນຊີ ແບ່ງປະເພດເປັນໝວດໝູ່ ຈົບດີ, ແຕ່ບາງບ່ອນກໍຍັງຖົມປະລະໄລປ່ອຍໃຫ້ກຸດຫ້ຽມ ປວກກັດ ມອດເຈາະ ຈະຊາຍ ຮ້າຍແຮງຍິ່ງໄປກ່ວານັ້ນ ຊ້ຳພັດມີປາກົດການດັດແປງເລື່ອງເດີມ ປອມແປງເລື່ອງ ໃຫ້ຜິດພາດຈາກຕົ້ນສະບັບ, ຜູ້ສຳລະບາງຄົນ ບໍ່ຂ້ຳໃຈພາສາຂອງຄົນບູຮານ ກໍເຮັດໃຫ້ ເລື່ອງຈຳນວນໜຶ່ງຄາດເຄື່ອນໄປ ຈາກເນື້ອແທ້ຂອງມັນ ແລະ ຈຳນວນໜຶ່ງກໍຖືກໄພສົງຄາມ ທຳລາຍຢ່າງຮ້າຍແຮງ ນອກຈາກນັ້ນ ຍັງມີປະກົດການນຳເອົາເລື່ອງທີ່ເສກສັນປັ້ນແຕ່ງ ບໍ່ດົບເນື້ອນເລື່ອງບູຮານມາຈານໃສ່ໃບລານໄວ້, ພາຍຫລັງທີ່ປະເທດຊາດໄດ້ຮັບການປົດປ່ອຍແລ້ວ ການຄຸ້ມຄອງປົກປັກຮັກສາໜັງສືໃບລານນ ກໍຍັງບໍ່ທັນຖືກເອົາໃຈໃສ່ເທົ່າທີ່ຄວນ ມີບາງທ້ອງຖິ່ນ ບໍ່ໄດ້ເອົາໃຈໃສ່ດ້ານນີ້ເລີຍ ນັບອາດບໍ່ຂ້ຳໃຈພໍ ແລະ ກໍບໍ່ໄດ້ໃຊ້ເຫື່ອແຮງຂອງຕົນ ເພື່ອປົກປັກຮັກສາ ດັ່ງນັ້ນ ຈຶ່ງເຮັດໃຫ້ໜັງສືໃບລານ ກໍຄືສິ່ງຂຽນອື່ນໆ ຕົກຮ່ຽເສຍຫາຍໄປນຳ ຢູ່ເລື້ອຍໆ... ແລະ ຈຳນວນໜຶ່ງກໍຖືກລັກລອບ ຂາຍອອກຕ່າງປະເທດກໍ່ມີ.

ການສຳມະນາຄັ້ງນ ມີຄວາມໝາຍສຳຄັນຫລາຍຢ່າງ ເປັນຕົ້ນ: ມັນໄດ້ເປີດໂອກາດໃຫ້ພວກເຮົາໄດ້ຄົ້ນຄ້ວາວິທີຂຸດຄົ້ນ, ວິທີປົກປັກຮັກສາ ແລະ ວິທີຈະນຳໃຊ້ຕໍ່ໄປ. ມັນໄດ້ໄຂສົ້ນທາງໃຫ້ແກ່ນັກວິຊາການນັ້ງວ່ຽນໄຂຂົມປັນຊີຂຸດຄົ້ນ ບົດຍາດ ມາດຕະຖານ ຂອງໜັງສືໃບລານ, ເປັນໂອກາດໃຫ້ພວກເຮົາ ແລກປ່ຽນບົດຮຽນ ທາງດ້ານເຕັກນິກ ວິທະຍາສາດ ໃນການປົກປັກຮັກສາໜັງສືໃບລານ, ເຮັດໃຫ້ພວກເຮົານຳໃຊ້ ທຸກຄວາມສາມາດ ປົ້ນຈ້ອນ

ຂອງທ້ອງຖິ່ນ ແລະ ມັນໄດ້ເຮັດໃຫ້ມີກວັດທະນະທຳພວກເຮົາ ນຳໃຊ້ໜັງສືໃບລານ ໃຫ້ເປັນ ປະໂຫຍດແກ່ສັງຄົມຍຸກສະໄໝ.

ເພື່ອປະຕິບັດຈິດໃຈ ຂອງກອງປະຊຸມໃຫຍ່ຂອງພັກ ຄັ້ງທີ ___ ໃນການປົກ ປັກຮັກສາ ແລະ ສືບທອດມໍລະດົກ ທາງດ້ານວັດທະນະທຳແຫ່ງຊາດ, ການສຳມະນາ ຄັ້ງປະ ຫວັດສາດນີ້ ພວກເຮົາຄວນຄົ້ນຄວ້າໃຫ້ເຫັນບັນຫາດັ່ງນີ້ :

- ສະພາບໜັງສືໃບລານ ແລະ ສິ່ງຂຍົນບູຮານອື່ນຜ່ານມາເປັນແນວໃດແທ້ ພວກ ເຮົາຄວນຮູ້ວ່າດຽວນສະພາບໜັງສືໃບລານເຮົາຖືກຕົກເຮ່ຍເສຍຫາຍໄປໃນຕ່າງປະເທດແນວ ໃດ ຫລາຍປານໃດ ? ຢູ່ປະເທດໃດແດ່ ?

ການຄົ້ນຄວ້າວິທະຍາ ວິທີໃນການຂົນຍ້ອນ, ການຄຸ້ມຄອງ ແລະການນຳໃຊ້ ໃບ ລານ ຕັ້ງແຕ່ອາດີດຈົນຮອດປັດຈຸບັນ ນັ້ນແນວໃດ ? ສະເພາະໜ້ານ ຂົນຕົນພວກເຮົາຕ້ອງ ລົງເລິກຄົ້ນຄວ້າຫາເບິ່ອໃນທີ່ເປັນປະໂຫຍດໃຫ້ແກ່ການດັດສ້າງວັດທະນະທຳຢູ່ໃນປະເທດເຮົາ ແລະ ພວກເຮົາກໍຈະຮັບຮູ້ຄວາມສຳຄັນຂອງມັນ.

ນອກຈາກນັ້ນ ພວກເຮົາກໍຄວນເອົາໃຈໃສ່ຄົ້ນຄວ້າ ໃຫ້ເຫັນນຳກັນວ່າ ຜ່ານມາ ພະສົງສາມະເນນ ຫົວປະເທດກໍໄດ້ເປັນເຈົ້າການ ໃນການປະດິດສ້າງໜັງສືໃບລານ, ຄຸ້ມ ຄອງ ແລະ ນຳໃຊ້ສິ່ງເຫລົ່ານັ້ນຈົນຮອດປັດຈຸບັນ.

- ຂ້າພະເຈົ້າ ຂໍເນັ້ນອີກວ່າ ຫລັງຈາກການສຳມະນານີ້ແລ້ວ ວຽກອັນຮີບດ່ວນສຳ ລັບໂຄງການນີ້ຄົງແມ່ນການເກັບກຳຂໍ້ມູນ ແລະ ການຂົນຍ້ອນໜັງສືໃບລານ ຫົວປະເທດ ຈາກນັ້ນຈຶ່ງຈະແມ່ນການອ່ານ ແລະ ການອ່ານນີ້ ກໍຄວນຊອກຫາເງື່ອນໄຂ ທີ່ມີລັກສະນະວິທະ ຍາສາດ, ເປັນຕົ້ນການໃຊ້ເຄື່ອງຈັກ ເອເລັກໂຕຣນິກນິກໂກຣພິມ ການຂຽນອອກເປັນພາສາ ສະໄໝໃຫມ່ ການຕຳນິວິຈານ ເຊິ່ງຈະແມ່ນພາລະກິດຂອງນັກຄົ້ນຄວ້າວັນນະຄະດີ ສິລະປະ ກຳ ທີ່ຈະຕ້ອງໄດ້ເຮັດໃນອານາຄົດ.

ຂ້າພະເຈົ້າຂໍຝາກຄວາມຫວັງ ນຳນັກວິທະຍາກອນ ແລະສະມາຊິກ ກໍຄືຜູ້ແທນ ທີ ເຂົ້າຮ່ວມກອງປະຊຸມທຸກຂັ້ນ ຈົ່ງໄດ້ສຸມທຸກກຳລັງເຫື່ອແຮງຂອງຕົນ ເພື່ອອຸທິດໃຫ້ແກ່ກອງປະ ຊຸມນີ້ ໃຫ້ໄດ້ຜົນລຸດໝາກຜົນຕາມລະດັບຄາດໝາຍ.

ສຸດທ້າຍນີ້ ຂ້າພະເຈົ້າ ຂໍອວຍພອນ ໃຫ້ທຸກທ່ານ ຈົ່ງມີສຸກຂະພາບເຂັ້ມແຂງ ອາຍຸ

ໝັ້ນຍືນ ໄດ້ຮັບໄຊຊະນະ ໃນວົງເຂດວຽກງານທີ່ພວກທ່ານກຳລັງຈະຄົ້ນຄ້ວາຕໍ່ໄປນັ້ ທຸກປະ
ການ.

ຂ້າພະເຈົ້າ ຂໍຖືເປັນກຽດ ໃນກອງສຳມະນາ ປົກປັກຮັກສາໜັງສືໃບລານ ຫົວ
ປະເທດ ຄັ້ງທີ _7_ ນີ້ເປັນທາງການ.

ຂໍຂອບໃຈ

ບົດລາຍງານ

ວິວັດທະນາການຂອງໜັງສືໃບລານໃນລາວ

ໂດຍ : ທຸມພັນ ລັດຕະນະວົງ

I .- ຄວາມໝາຍຂອງໃບລານ.

1/- ນິຍາມ :

ກ. ໃບລານ : ໃບຂອງຕົ້ນຕານ ແລະ ຕົ້ນລານ

ຂ. ໃບລານ : ແມ່ນໜັງສື ປະເພດຕ່າງໆ ເປັນຕົວອັກສອນຊະນິດຕ່າງໆ ທີ ຂຽນໃສ່ໃບລານ ຫລື ໃບຕານ.

ຄ. ໃບລານ : ຍັງມີຄວາມໝາຍ ນອກເໜືອໄປຈາກໜັງສື ທີຂຽນໃສ່ໃບຕານ ແລະ ໃບລານ ດ້ວຍ ຄືຄວບຄູ່ໄປເຖິງໜັງສືທີຂຽນໃສ່ຫາບ ໂລ ຫະ ເຊັ່ນ : ລານເງິນ-ລານຄຳ, ແລະ ທີຂຽນໃສ່ວັດຖຸຕ່າງໆ ເຊັ່ນ : ເຈ້ຍສາ, ເປືອກໄມ້; ຕົວໄມ້, ຫີນ, ດູກ, ໜັງ ວົວ ແລະ ອື່ນໆ...

(ຢ່າງນ້ອຍກໍແມ່ນຄວາມໝາຍສະເພາະໃນການ ສຳມະນາຄັ້ງນີ ້)

2/- ປະເພດ ຕົວອັກສອນ.

ຕາມປົກກະຕິແລ້ວ ໃນໜັງສືໃບລານ ຫລືໜັງສື ປະເພດເກົ່າແກ່ຂອງລາວ ກໍມັກ ມີຕົວໜັງສື ປະເພດຕ່າງໆຄືນ ;

- ລາວເດີ
- ທຳ
- ລ
- ຫາງໜູ
- ຂອມ

ນອກນັ້ນ ຍັງມີອົກສອນ ປະເພດຕ່າງໆອີກເຊັ່ນ :

- ຫາມ
- ໄຫ
- ພະນ້ຳ
- ນອນ
- ຝະລຶ
- ຂອນ (ລະເວນ)

3/- <u>ປະເພດ ໜ້າສີ</u>.

ກ. <u>ຄຳພີ ຄີກາ</u>.

- ສູດ
- ມົນ
- ອະພິທຳ
- ພະອໍໄພ
- ພະໄຕປົກ 10 ຊາດ - 50 ຊາດ ແລະ 500 ຊາດ, ເຊີ່ງຂຽນເປັນຮູບ ວັນນະກຳຂອງພຸດທະສາສະໜາ.

ຂ. <u>ວັນນະກຳ ບູຮານ ເຊັ່ນ</u> :

(ສີນໄຊ - ແຕ້ວອ່ອນ - ຂຽວໜ້ຽວ - ທ້າວຮຸ່ງທ້າວເຈືອງ -ຂຸນລູ ນາງອົວ)

ຄ. <u>ວັນນະກຳ ທີ່ແປ ຫລື ຄັດຈາກວັນນະກຳ ຕ່າງປະເທດ</u>.

(ພະລັກພະລາມ - ນາງຕັນໄຕ ...)

ງ. <u>ຕຳນານ ພົ້ນສາວະດານ</u>.

- ຕຳນານ ຫລວງພະບາງ

- ตำบาน ວຽງຈັນ
- ตำบาน พะแอุกคำ
- ตำบาน พะแก้ว มัลละกิด
- นิทาน ขุนบูลม - นิทานพมากบ้ำต้าปุว - นิทานเลือดอำภาด

...

จ. <u>ประเพด คำสอน</u>.

- อุบัติยาม สอนลูก
- ปู่สอนหลาน
- สุพาสิด ชูธาม ต่าวๆ
- ลำทำนาย

ส. <u>ประเพด อุทะยาสาด ชูธาม</u>.

- ตำลา ยาพันเมือว
- ตำลา เลก
- ตำลา โทละสาด

.....

ช. <u>ประเพดคำพะหยา - กอมสาม - อับลำ</u>.

ย. <u>ประเพด กิดหมาย</u>.

นิทาน มูนละตันไต ...

4/- <u>ความสำคัน</u> :

เป้นที่แม่นอนแล้วว่า หนังสือภาแก่นั้น มีความสำคันอันมะหาสาม.

ก. มันบ่สะเพาะแต่เป้นมูนเซอทางวัดทะมะทำของชาดลาว เผ่าต่างๆ ที่นั้น แต่ยังเป้นล้วสาว ทางวัดทะมะทำของมอนมะนุด ในโลกด้วย.

ຂ. ເປັນພື້ນຖານ ແລະ ເອກະລັກ ທາງວັດທະນະທຳຂອງຊາດລາວ, ເປັນບ່ອນ ອີງເພື່ອຂະຫຍາຍ ວັດທະນະທຳຂອງຕົນໃນອານາຄົດ ພ້ອມກັນນັ້ນ ກໍເປັນບົດຮຽນ ອັນລ້ຳຄ່າ ທາງວັດທະນະທຳ ສຳລັບປະຊາຊາດຕ່າງໆ ໃນໂລກດ້ວຍ.

ຄ. ເປັນວັດຖຸດິບອັນບໍ່ເຫືອດແຫ້ງ ໃນການຄົ້ນຄ້ວາ ທາງວິທະຍາສາດ ເຊັ່ນ :

- ສິລະປະ - ວັດທະນະທຳ
- ປະຫວັດສາດ
- ອັກສອນສາດ
- ຈຶນເຜົ່າວິທະຍາ
- ປັດຊະຍະ - ຈິດຕະສາດສັງຄົມ

ແລະ ຂະແໜງ ວິທະຍາສາດອື່ນໆ ຫລາຍຂະແໜງ.

5/- <u>ຄວາມສັກສິດ</u> .

ຄົນລາວເຮົາ ປະເພນີ ເທີດທູນໜັງສືເກົ່າແກ່ ບໍ່ສະເພາະແຕ່ຖືວ່າ ເປັນຂອງ ມີຄຸນຄ່າອັນສູງສົ່ງທັ້ນ ແຕ່ຍັງຖືວ່າເປັນຂອງສັກສິດອີກດ້ວຍ, ມັນສະແດງອອກດ້ວຍ ພິທີກຳ ຕ່າງໆ ໃນການປະພຶດ ແລະ ປົກປັກຮັກສາໜັງສືເຫລົ່ານັ້ນ.

- ຕາມມູນເຊື້ອທີ່ເຄີຍມີມາແລ້ວ ຊາວລາວ ໂດຍສະເພາະ ຊາວພຸດທະສາ ສະນິ ກະຊົນ ຈະຮັກສາໜັງສືໄວ້ ເປັນຂອງສ່ວນໂຮມໃນສະຖານທີ່ສັກສິດນັ້ນຄັ້ນ. ວັດ ນອກຈາກ ຈະມີພາລະບົດບາດທາງດ້ານອື່ນໆແລ້ວ ຍັງເປັນສູນວັດທະນະທຳຂອງບ້ານໜ່ວຍ ຫລືເມືອງ ເມືອງໜ່ວຍ ເຊິ່ງໃນນັ້ນການສຶກສາຫລັກຮຽນ ແລະ ການສະໜຸດ ກໍເປັນພາກສ່ວນ ໜຶ່ງ ຂອງການເຄື່ອນໄຫວຂອງສູນດັ່ງກ່າວນັ້ນດ້ວຍ, ຍິ່ງໄປກ່ວານັ້ນ ຍັງເປັນການສະໜຸດ ທີ່ສຶກ ສາລະອຽດດ້ວຍ ຄືວ່າ ຕູ້ກຳພີ ຂອງວັດເຊິ່ງເອນວ່າ ຫໍໄຕນັ້ນ ໄດ້ປະກອບຂຶ້ນເປັນສິ່ງສັກກະ ລະ ຄຽງຂ້າງພະພຸດທະຮູບສະເໝີ ແລະ ໄດ້ຮັບການນັບໄຫວ້ ສູດ ບິອລະບັດ ຂັດສິ:.. ແລະ ຄາລະວະຊ້ຳໆກັນກັບ ພະພຸດທະຮູບດ້ວຍ.

- ໃນການເຮັດບຸນສົ່ມກົມທາງ ໂດຍສະເພາະໃນການບວດຫົດ ອຸປາສົກ ອຸປາສິ ກາຜູ້ຈັດກອງບຸນນັ້ນ ອັນເປັນຮູບການສືບທອດໜັງສືເກົ່າແກ່ນຢ່າງສັກສິດດ້ວຍ.

ການເຄົາລົບຕໍ່ຫນັງສືຜູກ ຫລືຫນັງສືເກົ່າແກ່ຕ່າງໆເຫລົ່ານັ້ ຍັງສະແດງອອກ ໃນ
ການເຄື່ອນຍ້າຍຫນັງສື ຫລືການຖືຫນັງສື ຈາກສະຖານທີ່ນຶ່ງໄປສູ່ສະຖານທີ່ນຶ່ງ ເຊັ່ງມີກົດບັງຄັບ
ອັນຫນຶ່ງ ຫ້ານບໍ່ໃຫ້ຜູ້ຖືຫນັງສື ຍົດຫນັງສືລ້ວຕໍ່ກ່ວາຕັບອົກຂອງຕົນ ຫລືສວັດແກວ່ງຫນັງສື ໄປ
ມາແບບຂາດຄວາມເຄົາລົບຢຳເກງ ສຳຫລັບສາມັນຊົນທຳມະດາ ຕ່າງກໍມີຫນັງສືປະເພດສົມ
ແກ່ນໄວ້ໃນບ້ານເຮືອນ ເປັນສົມບັດຂອງຕົນເອງ ຄົນລະມັດລະຜູກ ເຊັ່ງເອົາເຈົ້າ ຮັກສາໄວ້
ບົນຫົ້ ຫລື ຫົ້ ຕັ້ງໄວ້ບົນຫ້ອນອນ ຫລື ເທິງຫນ້າຫ້ອງສະເຫມີ. ທຸກວັນສິ້ນ ຫລືປາງບຸນ
ໃຫຍ່ໆມາ ເຂົ້າເຈົ້າຕ້ອງເອົາດອກໄມ້ ທູບທຽນບູຊາບົນໄຫວ້ ຖືວ່າເປັນຂອງສັກສິດ ແລະ
ສັກກະລະດ້ວຍ.

II .- ຫນັງສືໃບລານມີການພັດທະນາ ການປົກປັກຮັກສາ ແລະ ເສີມຂະ ຫຍາຍແນວໃດໃນຍຸກປະຫວັດສາດ.

1)- ບາງຂໍ້ສັນນິຖານ ກ່ຽວກັບຕົວຫນັງສືລາວ :

ພວກເຮົາຍອມຮັບນຳກັນແລ້ວວ່າ ທາງດ້ານອັກສອນສາດນັ້ນ, ອັກສອນ ລາວເຮົາ ແບບປະຈຸບັນ ມີວັດທະນາການມາຈາກຕົວອັກສອນປາລິ ແລະ ສັນສະກິດ ສະໄໝ ທີ່ມີການ ເຜີຍແຜ່ສາສະຫນາພຸດ ເຂົ້າມາໃນສຸວັນນະພູມປະເທດ ຄື ພຸດທະສັດຕະວັດທີ 2 (ກ່ອນ ຄ.ສ 236 ປີ), ແນ່ນອນ ຂະບວນວັດຂອງພາສາລາວ ແລະ ອັກສອນສາດນັ້ນ ກ່ອນຈະ ມາເຖິງສະໄໝປະຈຸບັນ ນັບວ່າຜ່ານຫລາຍຮູບຫລາຍແບບ ເຊັ່ງພວກເຮົາບໍ່ສາມາດ ຈະເອົາ ມາວິເຄາະ ແລະ ໄຈ້ແຍກນະທັນໄດ້ ແຕ່ສິ່ງທີ່ແນ່ນອນນັ້ນ ແລະ ນັ້ນກໍມີມາແລ້ວ ຕັ້ງແຕ່ດົນ ນານໃນຫລາຍຮູບຫລາຍແບບຕ່າງກັນເຊັ່ນ : ຕົວອັກສອນທີ່ຮູ້ກວ່າ ແບບກຸຍເຈົ້າ ຕົວອັກ ສອນ ແບບ ທາງຫນູ ຕົວອັກສອນທຳ ແລະ ຕົວອັກສອນລາວເດີ່ມ ແລະ ລາວແບບປະຈຸບັນ.

ນັກຄົ້ນຄວ້າບາງທ່ານໃຫ້ຄຳສະນິຖານວ່າ ຕົວອັກສອນລາວປະຈຸບັນ ໄດ້ແບບ ມາ ຈາກຕົວອັກສອນສຸໂຂໄທ ແຕ່ຂ້າພະເຈົ້າວ່າກົງກັນຂ້ານ: ຕົວອັກສອນສຸໂຂໄທ ໄດ້ແບບມາ ຈາກຕົວອັກສອນລາວທີ່ມາກ່ອນແລ້ວ, ນັກປາດຫລາຍທ່ານເປັນຕົ້ນແມ່ນ ທ່ານ ໄອໂມນີເອ ກໍມີຄວາມເຫັນແບບດຽວກັນນ ເຊັ່ງການຄົ້ນຄວ້າເລື່ອງນ ຈະໄດ້ກ່າວເນີນໄປຢ່າງເປັນການເປັນ ງ່ານພາຍຫລັງ. ຄວາມເກົ່າແກ່ຂອງຫນັງສືລາວເຮົານັ້ນ ບໍ່ມີຫຍັງໜ້າສົງໄສເລີຍ ແຕ່ເມື່ອງ

ຈາກສາຍເຫດນາມາປະສານ ຮ່ອງຮອຍ ຫລື ສົມບັດທາງດ້ານນັ້ ຈຶ່ງຕົກໄປນຳໄຟ ໄຫລໄປ ນຳນ້ຳ ຈົນແທບຈະບໍ່ມີຫຍັງເຫລືອອີກເລີຍ.

2)- <u>ສະໄຫມລ້ານຊ້າງກັບໃບລານ</u>:

ຕາກການເວລາຜ່ານໄປຫລາຍສະຕະວັດກ່ອນສະໄໝເຈົ້າຟ້າງຸ່ມນັ້ນ ຖືວ່າ ເປັນ ຍຸກສະລັບສັບຊ້ອນ ແລະ ມືດມົ້ວທາງປະຫວັດສາດຢູ່ກໍຕາມ ແຕ່ຍຸກເລີ່ມຈາກກາງສັດຕະວັດ ທີ 14 ຄື ສະໄຫມຟ້າງຸ່ມນັ້ນ ຖືວ່າເປັນບາດລ້ຽວທີ່ສາມາດຮູ້ເຖົ້າຮ່ອງຮອຍທາງປະຫວັດສາດໄດ້ ດີກ່ວາ. ເປັນທີ່ຍອມຮັບກັນໂດຍທົ່ວໄປແລ້ວວ່າ ໃນສະໄໝເຈົ້າຟ້າງຸ່ມນັ້ນ ປວງຊົນລາວເຜົ່າ ຕ່າງໆ ໄດ້ເຕົ້າໂຮມກັນເປັນເອກະພາບ ເປັນຍຸກທີ່ສັງຄົມລາວໄດ້ມີການຈັດສັນ ດ້ານລະບຽບ ຫລັກການ ການປົກຄອງ ແລະ ຄຸ້ມຄອງລັດ, ພ້ອມທັງເປັນຍຸກ ທີ່ເລີ່ມເນັ້ນໜັກໃນພຸດທະຄຳ ສອນ ເອົາພຸດທະປັດສະຍາ ເປັນບ່ອນອີງໃຫ້ແກ່ໂຄງບົນ ແລະ ເປັນຮູບຖານສະຕິ ສັງຄົມ ໝາຍຄວາມວ່າເປັນຍຸກເລີ່ມເຂົ້າສູ່ຄວາມຈະເລີນທາງວັດທະນະທຳ ພຸດທະສາດສະໜາເພື່ອ ເປັນການເລີ່ມຕົ້ນຍຸກດົ່ງກ່າວນັ້ນ ເຈົ້າຟ້າງຸ່ມໄດ້ເຊີນນັກປາດທາງພຸດທະສາດສະໜາ ຈາກ ນະຄອນຫລວງກຳປູເຈຍ ພ້ອມດ້ວຍພະບາງ ມາປະເທດລ້ານຊ້າງ ຈຶ່ງໄດ້ຮ່ວມກັບນັກປາດອາ ຈານປວງຊົນລາວ ສ້າງວັດວາອາຮາມຂຶ້ນຢ່າງຫລວງຫລາຍ ເປັນຕົ້ນແມ່ນ : ວັດແກ້ວ ຊຶ່ງ ເປັນສີໃຫ້ແກ່ຫລວງພະບາງ. ຍົກຕົວນັກປາດອາຈານ ນັກກາວີ ນັກປະພັນ ນັກຂວດ ໄດ້ພາ ກັນຈົດກ່າຍຄຳພີ້ໃນ ແລະ ສູ່ວ່າງໆ ອອກຢ່າງຫລວງຫລາຍ ແລະກໍ່ຈັດຕັ້ງການເຜີຍແຜ່ພຸດ ທະສາດສະໜາ ຢ່າງກ້ວາງຂວາງເລີ່ມແຕ່ນັ້ນມາ. ໂດຍຜ່ານຍຸກສະໄໝຕ່າງໆ ເປັນຕົ້ນຍຸກ ຂອງພະຍາສາມແສນໄທ ວໍຣຸນນະລາດ ໂພທິສາລາດ ແລະ ໄຊຸເສດຖາທິລາດ (ສະໄໝ ຫລວງພະບາງເປັນລາສະທານີ) ກໍ່ມີການສ້າງສາວັດວາອາຮາມຢ່າງບໍ່ຂາດໄລຍະ ເປັນຕົ້ນ ແມ່ນ : ວັດມີນມາ (1533) ວັດແກ້ວ, ວັດອະໄພ (ລາຊະການໂພທິສາລາດ) ວັດ ວໍຣຸນ (1516), ວັດຫາດໝາກໂມ (1504) ວັດມະໂນລົມ (ລາຊະການ ໄຊຍະ ຈັກກະພັດແພ່ນແຜ້ວ) ວັດສີພຸດທະທາດ (ສະຕະວັດທີ 15) ວັດທາດ (1548) ວັດ ຊຽງທອງ (ບູລະນະ 1560) ວັດທາດຈອມສີ (1527) ວັດສີບ (1480) ວັດ ສີບຊຽງລາມ (1484) ແລະອື່ນໆ... ພາຍຫລັງທີ່ຫລວງພະບາງເຊົ້າເປັນລາດສະທານີ

ແລ້ວ ນັກປາດອາຈານ ນັກຂວດ ແລະ ປວງຊົນລາວກໍ່ໄດ້ມີການສ້າງສາວັດວາອາຮາມ ສືບຕໍ່ ກັນມາ ເຊິ່ງຕົກມາຮອດສັດຕະວັດ ທີ 18 ຢູ່ຫລວງພະບາງ ກໍ່ມີຈຳນວນວັດທັງໝົດ 65 ແຫ່ງ ເຊິ່ງປະຈຸບັນຍັງເຫລືອຢູ່ແຕ່ 30 ກ່ວາວັດເທົ່ານັ້ນ.

ໃນຂະນະທີ່ອຽງຈັນເປັນລາຊະທານີ ສະໄໝເສົ້ຖາທິລາດ ສັດຕະວັດທີ 16 ກໍ່ມີ ວັດຢູ່ດ້ວຍກັນທັງໝົດ 70 ວັດ ໂດຍບໍ່ນັບວັດພະແກ້ວ ແລະ ວັດທາດຫລວງ. ປະຈຸບັນ ວັດຢູ່ ທົ່ວກຳແພງນະຄອນອຽງຈັນມີທັງໝົດ 80 ກ່ວາແຫ່ງ ແລະກໍ່ໃນໄລຍະດຽວກັນນ ຕົ້ວເມືອງ ນ້ອຍ-ໃຫຍ່ຕະຫລອດບ້ານຊ່ອງຕາມຊົນນະບົດ ກໍ່ໄດ້ມີການສ້າງສາວັດວາອາຮາມຂົນຢ່າງຫລວງ ຫລາຍເຊັ່ນກັນ ຊຶ່ງນະທີ່ ພວກເຮົາບໍ່ສາມາດຈະສະເໜີຕົວເລກຊັດເຈນໄດ້ໃນເວລານ.

ການທີ່ໃນແຕ່ລະຍຸກ ແຕ່ລະສະໄໝຂອງປະຫວັດສາດລາວ ມີການຂະຫຍາຍວັດວາ ອາຮາມນັ້ນ ມັນໝາຍເຖິງການຂະຫຍາຍຕົວ ແລະ ການພັດທະນາໜັງສືໃບລານ ກໍ່ຄືໜັງ ສືປະເພດຕ່າງໆຢ່າງຫລວງຫລາຍ. ມັນບໍ່ສະເພາະແຕ່ໝາຍເຖິງການເສີ່ມຂະຫຍາຍສິ່ງທີ່ມີ ຢູ່ ຄຳພີດີກາ ແລະ ການປົກປັກຮັກສາອັນເກົ່າແກ່ເທົ່ານັ້ນ ແຕ່ມັນຍັງໝາຍເຖິງການ ປະດິດ ແຕ່ງອອກມາເປັນວັນນະກຳ ແລະ ສົມບັດມໍລະດົກຂອງຊາດອີກດ້ວຍ. ພວກເຮົາ ສາມາດຍົກ ຕົວຢ່າງບາງຍຸກທີ່ຈະເລີນດ້ານສິລະປະ ວັດທະນະທຳລາວດັ່ງລຸ່ມນ :

+ <u>ຍຸກຂອງເຈົ້າອຸນນະລາດ</u> : ໄດ້ຂຍົມນີທານ ນາງຕັນໄຕ, ຂຍົມເລື່ອງພະລັກ ພະລາມ, ສືບທອດ ແລະ ຂຍົມນີທານຂຸນບໍ່ລົມ ແລະ ອື່ນໆ ຢ່າງຫລວງຫລາຍ ພ້ອມທັງສືບ ຕໍ່ຈົດກ່າຍຂະຫຍາຍຄຳພີດີກາ ທາງສາດສະໜາໃຫ້ກ້ວາງຂວາງດ້ວຍ. ນອກຈາກນ, ຢູ່ໃນ ຍຸກນເອງ ປະເທດລ້ານຊ້າງໄດ້ຮັບລູກສິດສົ່ງ ຈາກປະເທດເພື່ອນບ້ານ ເພື່ອສຶກສາຄຳພີດີກາ ໃນລາວ.

+ <u>ຍຸກພະເຈົ້າໄຊຍະເສດຖາທິລາດ</u> : ໄດ້ມີບັນນະກຳຫລາຍເລື່ອງເກີດຂົ້ນ ເປັ ນຕົ້ນແມ່ນ : ຕຳນານພະແກ້ວ, ຕຳນານພະແຊກຄຳ, ໜັງສືອຸລັງຂະທາດ ແລະ ອື່ນໆ ພ ເສດກ່ວາໜູ່ໃນຍຸກນ ແມ່ນຄວາມຮຸ່ງເຮືອງທາງດ້ານສະຖາປະຕະຍະກຳ ປະເພດຕ່າງ ໆ ຢ່າງຫລວງຫລາຍ ຕົວຢ່າງ :

1)- <u>ທາດ</u> : ມີທາດຫລວງ, ທາດສີສອງຮັກ, ທາດບັ້ງພວນ, ທາດ **ພະນົມ**

ຫາດເຊີງຊຸມ, ຫາດສີໂຄດຕະບູນ, ຫາດອີງຮັ້ງ, ຫາດໂພ່ນ, ຫາດວັດນາກ ແລະ ຫາດອື່ນ ອື່ນ ...

2)- ວັດ : ວັດພະແກ້ວ (ວຽງຈັນ), ວັດອີງຕໍ (ວຽງຈັນ) ວັດສີຄຸນ ເມືອງ (ຫນອງຄາຍ), ວັດສີສະເກດ (ຫນອງຄາຍ) ວັດໄຊເສດຖາ (ຫນອງຄາຍ) ວັດແດນເມືອງ (ຫນອງຄາຍ) ວັດສຸພັນຄູຫາ (ອຸດອນ), ວັດຊຽງຫອງ (ຫຼວງພະ-ບາງ 1561), ວັດຫາດຈອມສີ (ຫຼວງພະບາງ-1561) - ວັດສີສັ້ງຈອນ (...)

3)- ພະພຸດທະຮູບ : ພະອີງຕໍ (ວຽງຈັນ) ພະສຸກ ພະໄສ ພະອີງຕໍ ຊຽງ ຂວາງ, ພະອີງຕ ບ້ານນ້ຳໂມງ (ຫນອງຄາຍ) ແລະ ອື່ນໆ...

4)- ສີລາເລກ : ຈາລຶກຫາດຫລວງ, ຈາລຶກຫາດສີສອງຮັກ (1565) ຈາ ລຶກວັດສຸພັນຄູຫາ ອຸດອນ (1562) ຈາລຶກວັດແດ່ນເມືອງ, ຈາລຶກວັດພາຖຸງສຸກ(1550) ຈາລຶກວັດໄຊເສດຖາຫນອງຄາຍ (1554) ຈາລຶກວັດສີເມືອງຫນອງຄາຍ (1569) ຈາລຶກວັດສີຄຸນເມືອງໆຫນອງຫານ (1560) ວັດຈອມມະນີທ່າຫນອງຄາຍ (1554).

+ ຍຸກເຈົ້າສຸລິຍະວົງສາ : ຍຸກນີ້ຈັດວ່າເປັນຍຸກທີ່ປະເທດລ້ານຊ້າງກ້າວຂຶ້ນສູ່ໄລ ຍະສູງທາງດ້ານວັນນະກຳ ປະເພດຄຳກອນ ດັ່ງຈະເຫັນໄດ້ຈາກຫນັງສືເລື່ອງຕ່າງໆ ທີ່ຕົກມາ ຮອດເຮົາປະຈຸບັນນ ເຊັ່ນ : ສົມໄຊ (ຄຳກອນ), ສຸລິວົງ (ຄຳກອນ) ກົດໝາຍທຳ ມະຊາດຂຸນບໍ່ລົມ, ສຽວສະຫວາດ, ຊຽງໝ້ຽວ, ສະນະສັນທະ, ກາລະເກດ, ຂຸນຫົ ແຕ້ວອ່ອນ, ຂຸລູນາງອວ, ຜາແດງນາງໄອ່, ຈຳປາສີ່ຕົ້ນ ແລະ ນິທານ ກຳພ້າຕ່າງໆ ໜັງ ສືຕ່າງໆ ທີ່ເປັນຄຳກອນ ກອນອ່ານທັງໝົດ ຈັດເປັນປະເພດຕ່າງໆ ດັ່ງນ:

1)- ກອນອັກສອນສັ້ງວາດ (ສົມໄຊ)
2)- ກອນສາຍຟ້າ (ສຸລິວົງ)
3)- ກອນຫລິບຟ້າ (ແບບຂອງໜັງສື ທ້າວຮຸ່ງ ທ້າວເຈືອງ)

+ ຍຸກເຈົ້າອະນຸ : ຊຶ່ງເປັນຍຸກທີ່ປວງຊົນລາວຜ່ານພາຍໃນຊາດ ຫຳການ ຟື້ນຟູ

ສັ່ນຖານວັດທະນະທຳລາວ ທີ່ຜ່ານໄລຍະເສື່ອມໂຊມມາໄດ້ 100 ກ່ວາປີ (1694-1804) ການຟື້ນຟູໃນຍຸກນີ້ໄປຄຽງຄູ່ກັບການບູລະນະການປົກຄອງ ນອກນັ້ນຍັງໄດ້ປັບປຸງກໍ່ສ້າງຄົນໃໝ່ ທາງດ້ານສະຖາປະຕະຍະກຳ ແລະ ວັນນະກຳຂອງຊາດ ເຊິ່ງພວກເຮົາຈະເຫັນດັ່ງລຸ່ມນີ:

- <u>ສະຖາປັດຕະຍະກຳ</u> : ວັດສີສະເກດ (ວຽງຈັນ) ຫໍໄຕ ຫາດ 2 ຫນ່ວຍ ແລະ ວິຫານ 3 ຫລັງ ວັດຫໍພະແກ້ວ ສີຊຽງໃໝ່ ຂົວຂ້າມແມ່ນ້ຳຂອງ ສ້ອມແປງກຳແພງນະຄອນວຽງຈັນ ກຳແພງເມືອງຈຳປາສັກ ກຳແພງປ້ອງກັນເມືອງອຸບົນ ຫໍໄຕສ້າງ ພະທຸດທະຮູບ (3.700 ອົງ) ອ້ອມກົມມະລຽນວັດສີສະເກດ ວຽງຈັນ ແລະ ວັດຫໍພະແກ້ວ ສີຊຽງໃໝ່ ບູລະນະວັດ ແລະ ຫາດພະນົມ ສ້າງເມືອງຫນອງຄາຍ ແລະ ວັດສີບຸນເຮືອງຄົນໃໝ່ ສ້າງເມືອງສີຊຽງໃໝ່ຄົນໃໝ່ ... ແລະ ອື່ນໆ.

- <u>ວັນນະກຳ</u> : ໃນຍຸກນີ້ປະກົດມີຂະບວນໜັງສື ເຊິ່ງແຕ່ງເປັນ<u>ສາມ</u> ຕ່າງໆ ເຊັ່ນ: ສາມລຶບພະສູນ ສາມຫົ່ວ ສາມອ້ອຍຕ້ອຍຕ່ອນພະຍາ ສາມສະເຫມໃຫ ສາມມະນີກາບ ສາມສາລິກາ ສາມເສົ້າສະເຫມັນແມ່ ສາມເສົ້າສະເຫມັນຜູ້ ສາມຍິ່ງຫາຊາຍ ສາມຊາຍຫາຍິ່ງ ແລະ ອື່ນໆ ... ນອກຈາກນ ຍັງມີໜັງສືທ້ອງຖິ່ນ ເຊັ່ນ : ໜັງສື ທ້າວເຫລົ້າຄຳເຈົ້າລາດຊະວົງ).

ບາງຕົວຢ່າງທີ່ຍົກມາໃຫ້ເຫັນນີ້ ສະແດງວ່າ ຜ່ານຍຸກຕ່າງໆ ຂອງປະຫວັດສາດນັ້ນ ລາວເຮົາ ມີຄວາມຮຸ່ງເຮືອງທາງດ້ານວັດທະນະທຳ ຢູ່ໃນລະດັບສູງ. ການທີ່ນະຄອນວຽງຈັນ ມີວັດເຖິງກ່ວາ 70 ແຫ່ງນັ້ນ ນັ້ນກໍ່ບົ່ງບອກເຖິງຄວາມຮຸ່ງເຮືອງນຳ. ຍັນດານັກປາດ ອາຈານ ຫລາຍທ່ານ ໃຫ້ການຕີລາຄາວັນນະກຳ ຫລາຍຕໍ່ຫລາຍເລື່ອງ ເປັນຕົ້ນແມ່ນ ສົມໄຊ ຊຽງໜ້ຽງ ສຽວສະຫວາດ ທ້າວຮຸ່ງ ທ້າວເຈືອງ ຄັດທະນາມ ຈຳປາສີຕົນ ສຸລິວົງ ແຕງອ່ອນ ແລະ ອື່ກ ຫລາຍໆເລື່ອງ... ເປັນວັນນະກຳຊັ້ນຍອດທີ່ມີຄຸນຄ່າສູງ. ຈຳນວນພົນງານວັນນະກຳຍິ່ງໃຫຍ່ ແລະ ສຳຄັນໃນລາວເທົ່າທີ່ເກັບກຳເບື້ອງຕົ້ນມີເຊັ່ນ : ໜັງສືທີ່ລວມມາຈາກແຫລ່ງ ສຳຄັນ ຕ່າງໆ ມີໃນບັນຊີ 4.799 ເລື່ອງ ແຕ່ຍັງບໍ່ທັນວິເຄາະ ແລະ ຈຳແນກວ່າ ເລື່ອງເຫລົ່ານັ້ນ ຊ້ຳກັນຫລືບໍ ? ເພາະໜັງສືເຫລົ່ານັ້ ຣິບໂຮມມາຈາກບັນຊີຫລາຍບ່ອນ ເຊັ່ນ :

- ຈາກສູນຄົ້ນຄ້ວາຝະລັ່ງ : 726 ເລື່ອງ.

- ຈາກວັດຫໍພະແກ້ວ : 490 ເລື່ອງ
- ຈາກຫໍສະມຸດກະຊວງສຶກສາ:970 ເລື່ອງ
- ຈາກສະພາບັນດິດ :1.337 ເລື່ອງ
- ຫໍສະມຸດລາດຊະວັງ ຫຼວງພະບາງ : 1.147 ເລື່ອງ.

ເພື່ອເປັນການແນ່ນອນ ອາດເອົາຕົວຢ່າງ ບັນຊີໜັງສືສະພ່າລາຊະບັນດິດ ຈຳນວນ 1.337 ເລື່ອງ ມາວິໄຈຄົ້ນ ຄື : ແຕ່ເລື່ອງທີ 1 ຖືງເລື່ອງທີ 500 ແມ່ນຊາດົກ (ພະເຈົ້າ 500 ຊາດ) ແຕ່ເລື່ອງທີ 4.450 ຖືງເລື່ອງທີ 500 ແມ່ນຊາດົກ ພະເຈົ້າ 50 ຊາດ (ຫ້າສິບເລື່ອງ) ແຕ່ເລື່ອງທີ 490 ຖືງເລື່ອງທີ 500 ແມ່ນຊາດົກພະເຈົ້າ ສິບຊາດ (10 ເລື່ອງ) ແຕ່ເລື່ອງທີ 501 ຖືງເລື່ອງທີ 770 ແມ່ນນິທານ ທຳມະບົດ (277 ເລື່ອງ) ແຕ່ເລື່ອງທີ 778 ຖືງເລື່ອງທີ 1.011 ແມ່ນເລື່ອງນິທານ ນິງຄຸນທິບປານີ (234 ເລື່ອງ, ແຕ່ເລື່ອງທີ 1.012 ຖືງເລື່ອງທີ 1.343 ແມ່ນນິທານເລື່ອງອຸ້ມອົ້ມ... (331 ເລື່ອງ). ສ່ວນໃຫຍ່ແມ່ນເລື່ອງທີ່ນັກປາດອາຈານລາວປະດິດ ແຕ່ງຂຶ້ນ ເອງຫລື ເອນວ່າ ມາຈາກແຫລ່ງປະຫວັດສາດ (ລາຍລະອຽດ ຈະໄດ້ຕິດຕັດສຳເນົາ ລາຍງານໃນຕອນທ້າຍ). ແລະສ່ວນທີ່ຍັງບໍ່ທັນໄດ້ສຳຫລວດ ຫລື ບໍ່ທັນໄດ້ຂຸນຂັ້ນຊຸ້ນ ກໍມີຢ່າງຫລວງຫລາຍເຊັ່ນ :

- ນິທານປາກເປົ້າ : ຢູ່ຕາມທ້ອງຖິ່ນຕ່າງໆ ເຊັ່ນ: ເລື່ອງຈ້ວຄ້ວງດ້ວງແດງ ນອນສະແຄວຄູ່ວຟ້າ, ນິທານພົດພົມ ປູ່ປົ້ມຍ່າກະລົ້ມ, ປູ່ເຍີ່ຍ່າເຍີ...
- ໜັງສືໃບລານຢູ່ນຳເຮືອນປະຊາຊົນ.

ເພາະການສຳຫລວດໃນໄລຍະຜ່ານມາ ແມ່ນສຳຫລວດແຕ່ໃນ<u>ວັດ</u> ໃນຕົວເມືອງ ເຊັ່ນ : ເມືອງວຽງຈັນ ເມືອງຫລວງພະບາງ. ເຊິ່ງການສຳຫລວດນັ້ນກໍ່ຫົວເຖິ່ງ ບ້ານນອກຂອກຄາເມຂອງແຂວງຊ້ຳ. ອີກດ້ານໜຶ່ງ ຫລາຍແຂວງກໍ່ທັນໄດ້ສຳຫລວດເທື່ອ ແລະ ຜ່ານມາພວກເຮົາໄດ້ສຳຫລວດແຕ່ວັດໃນຕົວເມືອງວຽງຈັນ ຫລວງພະບາງ ແລະ ຈຳປາສັກເທົ່ານັ້ນ ສ່ວນຄຳມ່ວນ ໄດ້ສຳຫລວດພຽງ 11 ວັດ ກໍຮູ້ວ່າມີໜັງສືພຽງ 13 ເລື່ອງ ສ່ວນເພັ້ນວ່າອາດເປັນໄປບໍ່ໄດ້.

- ນອກຈາກນັ້ນແລ້ວ ຈາລຶກອື່ນໆ ເຊັ່ນ: ສິລາເລກໃນແຫ່ນ ແລະ ຖ້ານພະພຸດທະ

ຮູບ ລາຍຂີດຂຽນ ແຕ້ມຢູ່ຖ້ຳ ຫລື ຝາຜະຫັງ ແລະ ໃບຮານວັດຖຸສະຖານຕ່າງໆ ທີ່ໄດ້ສຳ
ຫລວດມາກໍມີປະມານ 300 ໂຕຂຶ້ນ ສ່ວນທີ່ຍັງບໍ່ທັນໄດ້ສຳຫລວດນັ້ນ ກໍຍັງມີສ່ວນໜ້ວຍຫລາຍ
ເພາະວ່າ ການສຳຫລວດດ້ານນີ້ ຍັງບໍ່ທັນໄດ້ປະຕິບັດຢ່າງເປັນກິດຈະລັກສະນະເທື່ອ.

3)- ໄພພິບັດຕໍ່ໜັງສືໃບລານ ໃນສະໄໝລ້ານຊ້າງ :

ເວົ້າເຖິງການສູນເສຍໜັງສືໃບລານ ໃນສະໄໝລ້ານຊ້າງແລ້ວ ພວກເຮົາກໍ່ຈະ
ສັນນິຖານໄດ້ວ່າ ມັນມີຕົ້ນເຫດຫລາຍປະການອະທິເຊັ່ນ : ສົງຄາມ ອັກຄີໄພ ອຸທະກະໄພ
ການປຸ້ນສະດົມ ແລະ ການສູນເສຍໄປ ຍ້ອນການເວລາ.

ຊາວລາວພວກເຮົາ ມີປະເພນີຢູ່ເຮືອນໄມ້ ເວັ້ນເສຍແຕ່ວັດວາອາຮາມ ເທົ່ານັ້ນ
ທີ່ກໍ່ສ້າງດ້ວຍດິນຈີ່ປະທາຍ ສຳຫລັບເຮືອນໄມ້ແລ້ວ ອັກຄີໄພນັ້ນ ເປັນເລື່ອງທີ່ຫລີກລ້ຽງ ໄດ້
ຍາກ ຊຶ່ງຕາມຄວາມຈິງປະຫວັດສາດລາວ ກໍໄດ້ຢັ້ງຢືນມາແລ້ວ. ເມືອງທັງເມືອງ ຖືກຜົ່ງ
ໄໝ້ເປັນເຖົ່າຖ່ານເຊັ່ນ : ໃນປີ 1774 ໃນມື້ວັນຂຶ້ນປີໃໝ່ລາວ ຕົວເມືອງ ຫລວງພະບາງ
ປະສົບອັກຄີໄພໄໝ້ທົ່ວທັງເມືອງ ອັນເຮັດໃຫ້ມີການສູນເສຍຢ່າງຫລວງຫລາຍ ໂດຍສະເພາະ
ຄຳພີຄຳພາໜັງສືໃບລານ ເຊິ່ງເປັນມໍລະດົກທາງດ້ານວັດທະນະທຳ. ນອກຈາກອັກຄີໄພແລ້ວ ກໍ
ຍັງມີອຸທະກະໄພຫລາຍຄັ້ງຫລາຍຄາວ ເຮັດໃຫ້ບ້ານນ້ອຍເມືອງໃຫຍ່ ເຮືອນຊານ ບ້ານຊ່ອງ
ວັດວາອາຮາມ ຫໍໄຕ ຖືກສູນເສຍໄປຢ່າງເມືອງນິດ ປະກອບກັບດິນຟ້າອາກາດທີ່ອຸ່ມອ໋ນ ຂອງ
ບ້ານເຮົາ ກໍ່ຍິ່ງເຮັດໃຫ້ການປົກປັກຮັກສາໜັງສືຫມໍ່ລ້ານໄວ້ໄດ້ຍາກ ເພາະຖືກປວກ ມອດ
ແມງໄມ້ ທຳລາຍເຮັດໃຫ້ອາຍຸຂອງໜັງສື ປະເພດຕ່າງໆນັ້ນສັ້ນເຂົ້າ. ໄພພິບັດຮ້າຍແຮງອີກ
ອັນໜຶ່ງແມ່ນສົງຄາມຮຸກຮານ ທີ່ໄດ້ເຜົາຜານຢ່າງປ່າເຖື່ອນ ເປັນຕົ້ນແມ່ນໃນປີ 1887 ພວກ
ຫົ້ວຫໍ່ໄດ້ຈູດເຜົາເມືອງຫລວງພະບາງໄໝ້ທັງເມືອງ ຍັງເຫລືອໄວ້ແຕ່ວັດຊຽງທອງເທົ່ານັ້ນ
ຊຶ່ງຖືວ່າ ເປັນເຫດການໜຶ່ງ ທີ່ເຮັດໃຫ້ມໍລະດົກທາງວັດທະນະທຳຖືກຄັບມອດໄປ. ປີ 1778
ນະຄອນວຽງຈັນ ອັນເປັນສູນກາງໃຫຍ່ທາງດ້ານວັດທະນະທຳຂອງລາວ ຊຶ່ງຕາມການ ບັນທຶກ
ຂອງນັກທ່ອງທ່ຽວຕາເວັນຕົກບອກວ່າ ມີຄວາມງາມທີ່ສຸດເມືອງໜຶ່ງໃນອາຊີອາຄະເນ ໄດ້ຖືກ
ສົງຄາມສັກດິນາສະຫຍາມ ມາເຜົາຜານເປັນຄັ້ງທຳອິດ. ພວກເຂົາໄດ້ເອົາພະແກ້ວ ມໍລະດົກ
ພະບາງ ແລະ ປຸ້ນເອົາຈັບສົມບັດອັນມີຄ່າທາງວັດທະນະທຳໄປ ແລະ ຕໍ່ມາປີ 1828 ນະ

ຄອມວຽງຈັນ ແລະ ຕົວເມືອງອື່ນໆ ຫລາຍເມືອງໄດ້ຖືກປຸ້ນສະດົມເຜົາຜານອີກ ເມືອງຫັ້ງ ເມືອງກາຍເປັນບ້ານຮ້າງ ຕະຫລອດພະພຸດທະຮູບຫອງ ກໍຖືກເຜົາໃຫ້ເສື່ອມເອົາຫອງໄປ ຈັບ ສົ່ນເວົ້ນຄຳ ຄຳພີກາມໍລະດົກອັນລ້ຳຄ່າທາງວັດທະນະທຳ ທີ່ເຫລືອຈາກການປຸ້ນສະດົມໃນຄັ້ງ ກ່ອນກໍປຸ້ນເອົາໄປອີກ. ຕາມທີ່ອາຈານ ລາຟັ້ງ ນັກປະຫວັດສາດຂອງຝະລັ່ງ ໄດ້ຂຽນໄວ້ວ່າ ພາຍຫລັ້ງທີ່ສັກດິນາສະຫຍາມເຜົ້າຕີເມືອງວຽງຈັນ ເປັນເຖົ້າຖ່ານແລ້ວ ພວກເຂົ້າ ກໍບັ້ງຄັບ ເອົາປະຊາຊົນ ທີ່ເຫລືອຕາຍໃນວຽງຈັນໄປເປັນຂ້ອຍ ເຮັດວຽກສັບພະທຸກຢູ່ບາງກອກ 6000 ຄອບຄົວ. ມລາງທ່ານ ມະຫາສິລາ ວີລະວົງ ບອກໃຫ້ຮູ້ວ່າ ໜັ້ງສືທີ່ພວກສັກດິນາ ສະຫຍາມ ເອົາໄປຈາກວຽງຈັນ ໃນສະໄໝນັ້ນບັ້ນຈຸຢູ່ຫໍສະໝຸດບາງກອກ ແລະ ມີຢູ່ 10 ຕູ້ ຂະໜາດ ໃຫຍ່ດ້ວຍກັນ.

ຄັ້ນມາຮອດປີ 1873 ພວກທັ ທີ່ມາຮຸກຮານລາວ ໄດ້ທຳການຈູດເລົາເຜົາຜານວັດ ວາອາຮາມເຈາະໃຈທາດໃຈສົ່ມ ປຸ້ນເອົາຊັບສົ່ມບັດທີ່ມີ່ຄ່າໄປ. ຈາກຫດການ ອັນປ່າເຖື່ອນ ແລະ ຂົ່ມຂືນນັ້ນເອງ ທີ່ວ່ຕົວເມືອງວຽງຈັນ ໄດ້ກາຍເປັນເມືອງຮ້າງ ຍັງເຫລືອໄວ້ແຕ່ກອງຫີນ (ກຳແພງເມືອງ ແລະ ວັດວາອາຮາມເພ).

4)- <u>ສະໄໝລ່ານເມືອງຂົ້ນ ແລະ ສະໄໝສົ້ງຄາມທຳລາຍກັບໃບລາມ.</u>

ລັດທີ່ລ່ານເມືອງຂົ້ນຈະແມ່ນເກົ່າ ແລະ ໃຫມ່ກໍ່ລ້ວນທີ່ທາດແທ້ ເປັນສັດຕູ ຕໍ່ວັດທະ ນະທຳຂອງຊາດ ແລະ ເອກະລັກຂອງຊາດ. ສົ່ງນ ນັ້ນສ່ອງແສງໃຫ້ເຫັນລັດທີ່ທຳລາຍ ຈົ່ນ ໄປເຖິງລົບລ້າງ ເອກະລັກ ແລະ ມຸ່ນເຊຍວັດທະນະທຳຂອງຊາດ ທຳລາຍຈິດໃຈຊາດແລ້ວ ນຳເອົາວັດທະນະທຳ ທີ່ມທາດແທ້ ທີ່ເບ່ອເມ້ົາເຂ້ົາມາແທນ ທັ້ງນ້ັ້ນເພ່ືອໃຫ້ພວກເຂ້ົາ ສາມາດ ປົກຄອງໄດ້ຢ່າງສະບາຍຕະຫລອດໄປ.

ຕະຫລອດໄລຍະ 200 ປີ ແຫ່ງການປົກຄອງຂອງພວກສັກດິນາສະຫຍາມ ພວກລ່ານ ເມືອງຂົ້ນຝະລັ່ງ ແລະ ຈັກກະພັດອາເມລິກາ ນ ຊາຕາກຳທາງດ້ານວັດທະນະທຳ ຂອງລາວ ໂດຍທົ່ວໄປ ແລະ ໃບລາມເວ້ົາສະເພາະ ໄດ້ຕົກຢູ່ໃນສະພາບພໍສະຫລຸບໄດ້ດັ່ງນ້ ້ :

ກ/- <u>ການຍຶດຄອງລາວສ່ວນໜ້ົາ ຂອງສັກດິນາສະຫຍາມ ເລ້ີມຕ້ົ້ງແຕ່ປີ 1778 ເປັນຕ້ົນມາ</u> :

ພວກເຮົາໄດ້ຮູ້ນຳກັນແລ້ວ ເຖິງໄພອັນຍ້ອນຈາກສົງຄາມຮຸກຮານເມືອງວຽງຈັນ 2 ຄັ້ງ ແຕ່ໄພອັນນັ້ນ ພຽງແຕ່ເປັນສ່ວນໜຶ່ງເທົ່ານັ້ນ ຂອງໄພພິບັດອັນມະຫັນ. ການຍຶດຄອງເອົາລາວສ່ວນໜຶ່ງເປັນປະເທດສະລາດຂອງສັກດິນາສະຫຍາມ ໃນອາລະຕໍ່ມານັ້ນ ຕິດຕາມມາດ້ວຍມາດຕະການອັນເລິກແລບແນບນຽນຫລາຍຢ່າງ ເຊິ່ງເປັນການກໍ່ຄວາມເສຍຫາຍແລະທຳລາຍຍາວນານຕໍ່ລາວເຊື່ອ :

+ ປະຕິບັດການປຸ້ນສະດົມມໍລະດົກ ທາງດ້ານວັດທະນະທຳຂອງລາວ ເຊິ່ງໃນນັ້ນ ມີໜັງສືໃບລານ ແລະ ອື່ນໆ...

+ ປະຕິບັດປຸ້ນກຳລັງມັນສະໝອງ ແລະ ກຳລັງຄົນ ເປັນຕົ້ນແມ່ນຈັດຕະກອນ ປະຕິມາກອນ ສະຖາປະນິກ ແລະ ຜູ້ຄົນທຳມະດາ ເພື່ອເອົາໄປເປັນທາດຮັບໃຊ້ເອົາ.

+ ພວກເຂົາບັງຄັບໃຫ້ຄົນລາວຮຽນ ແລະ ໃຊ້ພາສາໄທ ເອົາໜັງສືໄທ ທົດແທນໃສ່ປົ້ມຫລືໃບລານ ມາແທນໜັງທຳ ແລະ ໜັງສືລາວ.

+ ສິ່ງທີ່ຮ້າຍທີ່ສຸດນັ້ນ ແມ່ນການປະຕິບັດການຫັນເປັນໄທ (ລັດທິໄທໃຫຍ່) ທີ່ພວກເຂົາໄດ້ດຳເນີນຕໍ່ລາວ ໂດຍສະເພາະ ພາຍຫລັງການແຍ່ງກັນຍຶດຄອງປະເທດລ້ານຊ້າງ ລະຫວ່າງຝະລັ່ງ ແລະ ສະຫຍາມ. ສິ່ງທີ່ຮ້າຍໄດ້ແຈ້ງນັ້ນ ແມ່ນພວກເຂົາໄດ້ປະຕິບັດຕໍ່ພວກທີ່ຕົກໄປເປັນເມືອງຂຶ້ນຂອງພວກເຂົາ ຊຶ່ງເອີ້ນວ່າ ພວກພາກອິສານປະຈຸບັນ. ຕໍ່ພາກສ່ວນ ນອກຈາກພວກເຂົາຫ້າມຮຽນພາສາລາວ ໃຊ້ພາສາລາວ ແລະ ຈຳກັດທາງດ້ານຕ່າງໆ ແລ້ວພວກເຂົາຍັງໃຊ້ວິທີ ກືນໃຫ້ເປັນໄທ (ເປັນສະຫຍາມ) ໃນການຫັນເປັນໄທຂອງພວກເຂົານັ້ນ ພວກເຂົາໄດ້ແຕະຕ້ອງເຖິງຊາດລາວເຮົາດ້ວຍ ເປັນຕົ້ນດ້ານສິລະປະວັນນະຄະດີ ອັນເປັນມໍລະດົກຂອງລາວ ເຂົ້າກໍ່ວ່າແມ່ນຂອງໄທ ຕະຫລອດຮອດພົນວຽງຈັນ ພົນຫລວງພະບາງ ແລະ ວັນນະກຳທຸກຢ່າງ ກໍ່ວ່າແມ່ນຂອງໄທ ໂດຍພາຍໃຕ້ຂໍ້ອ້າງແບບບ້ຽວອາດ ທີ່ວ່າ ລາວກໍ່ແມ່ນໄທ (ໄທຍ). ດັ່ງນັ້ນ ວັດທະນະທຳຂອງລາວກໍ່ແມ່ນຂອງໄທ.

2/- <u>ໃຕ້ການຢຶດຄອງຂອງລ່າເມືອງຂຶ້ນຝະລັ່ງ</u> :

ນະໂຍບາຍແບ່ງແຍກ ເພື່ອປົກຄອງຂອງພວກລ່າເມືອງຂຶ້ນຝະລັ່ງ ແລະ ສະຫຍາມ

ນັ້ນໄດ້ຮັດໃຫ້ລາວເສຍດິນແດນ ຕົກເປັນຂອງໄທ ແລະຂອງຝະລັ່ງ ເຊິ່ງໄດ້ຮັດໃຫ້ລາວ ສູນເສຍໝົດກຳລັງວັງຊາ ທີ່ຈະຝົ່ນຕົວເອງໄດ້ເທົ່ານານ. ສຳລັບພວກລ່າເມືອງຂຶ້ນຝະລັ່ງ ແລ້ວ ປະເທດລາວແມ່ນເລືອງປົກປາຍເທົ່ານັ້ນ ຖ້າປຽບໃສ່ບັນດາປະເທດໃນອິນດູຈີນອື່ນໆ ທີ່ກາຍ ເປັນເມືອງຂຶ້ນຝະລັ່ງ ພວກເຂົາບໍ່ໄດ້ເອົາໃຈໃສ່ການທີ່ຈະພັດທະນາ ວັດທະນະທຳແຫ່ງ ຊາດໃຫ້ຈະເລີນ ບໍ່ເອົາໃຈໃສ່ການທີ່ຈະສ້າງພື້ນຖານວັດຖຸ ຫລື ໂຄງລ່າງ ໃຫ້ແກ່ດິດຈະ ກຳທາງວັດທະນະທຳເລີຍ ຍິ່ງໄປກ່ວານັ້ນ ພວກເຂົາໄດ້ຂົ່ມເຫັງສົ່ນທອນ ທາງວັດທະນະທຳ ລາວຢ່າງຈຳນວນໄປນຳອີກ. ພວກເຮົາບໍ່ປະຕິເສດໜ້າວຽກການວິທະຍາສາດຝະລັ່ງ ໄດ້ເລີ່ມໃຫ້ ຄວາມສົນໃຈແກ່ວັດທະນະທຳລາວ ໂດຍໃຫ້ການຊ່ວຍເຫລືອແກ່ລາວ ໃນການປະຕິສັງຂອມປູ ຊະນີຍະສະຖານບາງແຫ່ງເຊັ່ນ: ທາດຫລວງ ແລະ ວັດພະແກ້ວ ເຫລົ່ານີ້ເປັນຕົ້ນ ແລະ ໄດ້ ເລີ່ມສຳຫລວດຂຸມບັນຊີ ໜັງສືໃບລານຈຳນວນໜຶ່ງ ແຕ່ດິດຈະກຳດ້ານນີ້ ຖືວ່າ ເກືອບຈະບໍ່ມີ ຄວາມສຳຄັນຫຍັງເທົ່າໃດ ຖ້າທຽບໃສ່ພັນທະ ທີ່ລັດຖະບານຝະລັ່ງຕ້ອງປະຕິບັດຕໍ່ລາວ ໃນສະ ໄໝນັ້ນ ການສຳຫລວດໃບລານ ທີ່ໄດ້ປະຕິບັດມາກໍ່ມີດັ່ງນີ້ :

- 1898 ຄະນະປາວີ ສຳຫລວດສິລາເລກ 31 ແຜ່ນ ແລະ ໜັງສືໃບລານ ຈຳ ນວນໜຶ່ງ.

- 1900 ສູນຄົ້ນຄ້ວາພາກພື້ນຕາເວັນອອກໄກຝະລັ່ງ ໄດ້ສຳຫລວດ ມີ 1.217 ເລື່ອງ.

- 1917 ທ່ານ ຟີໂນ ໄດ້ສຳຫລວດ ມີ 1.163 ເລື່ອງ.

- 1959 ທ່ານ ລາຟົ່ງ ສຳຫລວດມີ 1.634 ເລື່ອງ.

ຄ)- <u>ການປົດຄອງຂອງລັດທິລ່າເມືອງຂຶ້ນແບບໃໝ່ ແລະ ສົງຄາມທຳລາຍ ຂອງອາເມລິກາກັບໃບລານ</u>.

ກ/- ພວກເຮົາຮັບຮຳກັນແລ້ວວ່າ ໜຶ່ງໃນທາດແທ້ຂອງລັດທິລ່າເມືອງຂຶ້ນແບບໃໝ່ ນັ້ນ ແມ່ນການເບື່ອເມົາສັງຄົມດ້ວຍເງິນ ແລະ ການຫລົ່ນກົ່ນຟູມເຟືອຍ. ການທຳລາຍວັດ ທະນະທຳທ້ອງຖິ່ນ ດ້ວຍຮູບການນຳເອົາແບບແຜນດຳລົງຊີວິດອັນຕ່ຳຕ້ອຍ ເຂົ້າມາເຜີຍແຜ່ ເປັນການຍຸ່ຍົງສົ່ງເສີມໂດຍທາງກົງ ແລະ ທາງອ້ອມ ໃຫ້ເກີດມີໄພສົງຄາມນາໆ ປະການ .

ພາຍຫລັງທີ່ລັດທິລ່າເມືອງຂຶ້ນຝະລັ່ງ ຖືກກຳຈັດອອກໄປແລ້ວ ລັດທິລ່າເມືອງຂຶ້ນແບບໃໝ່ຂອງ ອາເມລິກາ ກໍກະໂດດເຂົ້າມາແທນ. ຈຳນວນຕົວເມືອງໃຫຍ່ໆ ທີ່ສຳຄັນຂອງປະເທດ ແລະ ນວນຊົນທີ່ດຳລົງຊີວິດຢູ່ໃນດິນແດນສອງສ່ວນຫ້າຂອງປະເທດ ໄດ້ຕົກຢູ່ໃນສັງຄົມທີ່ເປື່ອຍເປື່ອນວັດ ວາອາຮາມ ທີ່ເປັນບ່ອນສັກສາລະບູຊາ ໄດ້ຖືກໃຊ້ໃຫ້ເປັນບ່ອນຫລິ້ນກິນ ເປັນບ່ອນຫາລາຍໄດ້ ສ້າງຮີງຄຸນນີໃຫ້ແກ່ພວກປະຕິກາມ. ວັດຖຸບູຮານ, ໜັງສືເກົ່າແກ່ທີ່ຫາຍາກ ຖືກລັກປຸ້ນອອກ ໄປນອກປະເທດຈຳນວນຫລວງຫລາຍ. ນອກຈາກນັ້ນ ເນື່ອງຈາກມີການຈັດພິມໜັງສືສູດເຫດ ຕ່າງໆ ອອກມາເປັນປຶ້ມສະໄໝໃໝ່ຢ່າງຫລວງຫລາຍ ຄວາມນິຍົມຂອງພະສົງອົງຄະເຈົ້າ ກໍ ເລີ່ມຫັນຈາກໃບລານມາສູ່ປຶ້ມອ່ານຫຳມະດາ ເພາະສະດວກສະບາຍກ່ວາ ຊຶ່ງເປັນເຫດໃຫ້ໃບລານຖືກປະລະປ່າງໜ້າສົນເຜດ. ໂຊກດີໃນເວລານັ້ນ ຍັງມີນັກປາດ ອາ ຈານ ແລະຜູ້ມີສັດທາສູງໄດ້ຮ່ວມແຮງຮ່ວມໃຈກັນຊຸດຄົ້ນສຳເລົ້າຂຶ້ນຂັ້ນຊີ ແລະ ຈົດກ່າຍ ໄວ້ ເພື່ອໃຫ້ຍືນຍົງມາເຖິງທຸກວັນນີ. ນັ້ນດ້ວຍນັກປາດອາຈານຜູ້ດີເດັ່ນ ທີ່ໄດ້ເອົາໃຈໃສ່ ຕໍ ການປົກປັກຮັກສາໜັງສືໃບລານ ແຕ່ສະໄໝຝະລັ່ງເປັນຕົ້ນມາກໍ່ມີ : ເຈົ້າຈົດຕະລາດ ເຈົ້າ ເພັດຊະລາດ ເຈົ້າສຸວັນນະພູມາ ທ່ານມະຫາສິລາ ວົງລາວົງ ທ່ານສົມຈິນ ເປັຍງົມ ທ່ານເກມ ແລະ ເຈົ້າອະທິການວັດຕ່າງໆ. ນອກນັ້ນ ຍັງມີນັກປາດຊາວຕ່າງປະເທດຈຳນວນໜຶ່ງ ທີ່ໄດ້ ໃຫ້ຄວາມສົນໃຈ ແລະ ຂຶ້ນຂັ້ນຊີໃບລານຂອງລາວດ້ວຍ.

ສຳຫລັບວັດທີ່ດີເດັ່ນ ໃນການປົກປັກຮັກສານັ້ນ ມັນສະແດງອອກຢູ່ບ່ອນວ່າ ມີຫໍໄຕ ໜີ ຄວາມຮັບປະກັນປອດໄພ ແລະ ມີຈຳນວນໜັງສືຫລາຍເຊັ່ນ: ໃນການສຳຫລວດປີ 1959 ມີດັ່ງນ :

+ ຫລວງພະບາງ: ວັດນີນນາ ມີ (135 ເລ່ມ) ວັດໜອງ ມີ (82 ເລ່ມ) ວັດອະໄພ ມີ (108 ເລ່ມ) ວັດວໍຊຸນ ມີ (101 ເລ່ມ) ວັດໃໝ່ ມີ (192 ເລ່ມ)

...

+ ວຽງຈັນ : ວັດພະແກ້ວ ແຕ່ເກົ່າມີ (499 ເລ່ມ) ວັດສີສະເກດ ມີ (112 ເລ່ມ) ວັດ(ມ)ໄຊ ມີ (90 ເລ່ມ) ວັດນາໄຊ ມີ (30 ເລ່ມ) ວັດອົງຕ໊ ມີ (74 ເລ່ມ)...

+ ຈຳປາສັກ : ວັດຫຳມະນີ ວັດດອນຫລັກໄຊ ມີ (50 ເລ່ມ) ວັດໂພໄຊສີ ມີ

(53 ເລື່ອງ) ວັດສັກເມືອງ ມີ (44 ເລື່ອງ)...

ຂ)- <u>ໃຕ້ສົງຄາມທຳລາຍຂອງອາເມລິກາ</u> :

ພວກເຮົາໄດ້ຮູ້ນຳກັນແລ້ວວ່າ ປະເທດລາວເຮົາມີຄົນ ສາມລ້ານກ່ວາຄົນ ໄດ້ປະສົບກັບສົງຄາມທຳລາຍທີ່ຮ້າຍແຮງທີ່ສຸດໃນໂລກ ຄື: ໃນໄລຍະ 9 ປີ ແຫ່ງສົງຄາມ ດົງກ່າວມັນ ປະຊາຊົນລາວໄດ້ຮັບລະເບີດ ສາມລ້ານໂຕນ. ໃນດິນແດນ ສາມສ່ວນຫ້າ ຂອງປະເທດມັນ ບໍ່ມີເສົາເຮືອນຢູ່ຝ່າຈັກຫລັງ ບ້ານເຮືອນວັດວາອາຮາມ ຖືກລະເບີດທຳລາຍ ແລະ ເຜົາຜານວັດຖຸບູຮານປູຊະນີຍະສະຖານ ຖືກທຳລາຍກ້ຽງ ໃນນັ້ນຫນັງສືໃບລານກໍຖືກຕົກຢູ່ໃນອຸຕາກຳອັນດຽວກັນ. ສະໄໝນັ້ນແມ່ນພະສົງອົງລະເຈົ້າ ແລະ ປະຊາຊົນໄດ້ຫອບເອົາຄຳພີດີກາທີ່ຍັງເຫລືອຈາກການທຳລາຍເຂົ້າໄປຂຸດເຊື່ອງໄວ້ໃນຖ້ຳ ໃນຮູ ຢ້ຽງພາຍລຸນມາກໍຕົກເຫນົ່າ ຕົກໂຫມກເປື່ອຍເສຍຫາຍໄປ. ການສູນເສຍເທື່ອນ ນັບວ່າໃຫຍ່ຫລວງ ເຊິ່ງບໍ່ສາມາດພັນລະນານັບໄດ້ ແລະ ນອນຊົມສາມັນລົ້ມຕາຍເປັນຈຳນວນຫລວງຫລາຍ.

ຄ)- <u>ໃບລານພາຍຫລັງສ້າງຕັ້ງ ສ.ປ.ປ.ລ.</u>

ເລີ່ມຕົ້ງແຕ່ສະໄໝຕໍ່ສູ້ປົດປ່ອຍຊາດເປັນຕົ້ນມາ ພັກ ແລະ ລັດຖະບານ ໄດ້ໃຫ້ຄວາມສຳຄັນແກ່ການປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມ ຂອງຊາດ. ການໃຫ້ຄວາມສຳຄັນດົງກ່າວນັ້ນ ສະແດງອອກໃນການວາງແນວທາງຍຸດທະສາດດ້ານວັດທະນະທຳ ເຊິ່ງຍາມໃດກໍໄດ້ເນັ້ນເຖິງລັກສະນະຊາດໃນວັດທະນະທຳ ຫມາຍຄວາມວ່າວັດທະນະທຳໃຫມ່ຂອງລາວນັ້ນ ຕ້ອງສ້າງຂຶ້ນດ້ວຍສີ່ງຍອດຍິ່ງ ຂອງຊາດເຜົ່າຕ່າງໆ ບວກກັບສີ່ງຍອດຍິ່ງຂອງຍຸກສະໄໝ. ມະຕິກອງປະຊຸມໃຫຍ່ຂອງພັກໄດ້ກ່າວໄວ້ວ່າ : "ສືບທອດແລະເສີມຂະຫຍາຍມໍລະດົກທາງດ້ານວັດທະນະທຳອັນລ້ຳຄ່າ ຂອງຊາດ ຂອງເຜົ່າຕ່າງໆ... ຮັບເອົາຫມາກຜົນທາງດ້ານວັດທະນະທຳຂອງໂລກຢ່າງມີການເລືອກເຟັ້ນ ສົມທົບກັນດ້າສີ່ງຍອດຍິ່ງຂອງຍຸກສະໄຫມກັບມູນເຊື້ອອັນຈີບງາມຂອງຊາດ". ໂດຍປະຕິບັດຈິດໃຈດົງກ່າວ ຄຽ້ງຄູ່ກັບການປົວແປງບາດແຜສົງຄາມອັນຮ້າຍແຮງ ສົມທົບກັບການປົກປັກຮັກສາປະເທດຊາດ ຕ້ານກັບກົນອຸບາຍຂອງສັດຕູ ແລະ ກ້ຽງເສດຖະກິດແລ້ວ ພັກລັດຖະບານພວກເຮົາ ຍັງໄດ້ອຸທິດທຶນຮອນ ກຳລັງວັງຊາຂອງຕົນ ເພື່ອກໍ່ສ້າງວັດທະນະທຳ. ການທີ່ພວກເຮົາມີກົງຈັກວັດທະນະທຳ

ແຕ່ຂັ້ນສູນກາງຮອດທ້ອງຖິ່ນ ມີວົງການຈັດຕັ້ງໝວດໂຮມ, ວົງການພຸດທະສາດສະໜາ ສຳພັນ ແຫ່ງປະເທດລາວ ແຕ່ຂັ້ນສູນກາງຮອດທ້ອງຖິ່ນ ເພື່ອປົກປັກຮັກສາ ແລະ ຄຸ້ມຄອງທາງວັດທະ ນະທຳໂດຍທົ່ວໄປ ກໍສະແດງເຖິງຄວາມເອົາໃຈໃສ່ເປັນຫ່ວງເປັນໃຍ ໃນນະໂຍບາຍຂອງພັກ-ລັດຜວກເຮົາ ແລະ ສິ່ງທີ່ເໜັ້ນໄດ້ຢ່າງຈະແຈ້ງທີ່ສຸດ ກໍແມ່ນການສຳນະນາໃບລານຂອງພວກເຮົາຊຸດນີ້ ຊຶ່ງສະແດງເຖິງຄວາມຈົດຈ່ຂອງພັກ-ລັດຖະບານເຮົາ ຕໍ່ການປົກປັກຮັກສາ ແລະ ເສີມຂະຫຍາຍມໍລະດົກຂອງຊາດທາງດ້ານນີ.

+ ແນວໃດກໍດີ ນະໂຍບາຍອັນຖືກຕ້ອງຂອງພັກນັ້ນ ພຽງແຕ່ໄດ້ຮັບການ ປະຕິບັດ ເປັນບາດກ້າວທຳອິດເທົ່ານັ້ນ ເຊິ່ງໝາກຜົນຂອງມັນ ຖືວ່າຈະມີມາກຫລາຍສົມຄວນກໍຕາມ ແຕ່ກໍຍັງຖືວ່າເປັນບາດກ້າວຂັ້ນຕົ້ນເທົ່ານັ້ນ. ນະໂຍບາຍນ ຍັງຈະໄດ້ຮັບການປະຕິບັດ ໃຫ້ ເກີດດອກອອກຜົນງອກງາມສືບຕໍ່ໄປ. ມະຕິກອງປະຊຸມໃຫຍ່ ຄັ້ງທີ 4 ຂອງພັກ ຍັງໄດ້ເນັ້ນ ໜັກວ່າ "ພັກເຮົາບໍ່ພຽງແຕ່ເອົາໃຈໃສ່ຖືກການຂະຫຍາຍວຽກງານສຶກສາ ຫາກຍັງຕ້ອງ ເອົາໃຈໃສ່ເປັນພິເສດ ຖືກການສ້າງວັດທະນະທຳໃໝ່ສັງຄົມນິຍົມ ການເປັນຫ່ວງ ເປັນໃຍ ຖືກການຂະຫຍາຍວັດທະນະທຳ ສິລະປະວັນນະຄະດີນັ້ນ ໝາຍຖືກການເອົາໃຈໃສ່ ຈົດຈ່ ຖືຊີວິດການເປັນຢູ່ທາງດ້ານຈິດໃຈຂອງສັງຄົມ ຮັດໃຫ້ຄຸນຄ່າທາງດ້ານວັດທະນະທຳ ເປັນ ຈັບສົມບັດຂອງປະຊາຊົນຢ່າງແທ້ຈິງ ". ນອກຈາກນ ມະຕິຍັງໄດ້ຕຳໜິ ຂໍ້ອາຄົດກົບົກພ່ອງ ຂອງພວກເຮົາທາງດ້ານວັດທະນະທຳດ້ວນ " 10 ປີກ່ວາຜ່ານມາ ພວກເຮົາໄດ້ມີ ຜົນງານ ຫລາຍປະການ ໃນວຽກງານວັດທະນະທຳ ສິລະປະວັນນະຄະດີ ແຕ່ຖ້າເບິ່ງເລິກເຊິ່ງ ແລ້ວ ຄວາມຂາດຕົກບົກພ່ອງຂອງພວກເຮົາ ໃນຂົງເຂດດ້ານ່ກ່ວຍັງມີຢູ່ບ້ນ້ອຍ ຈະຕ້ອງດັດແປງແກ້ ໄຂຈິດສຳນຶກກ່ຽວກັບການຖືເບົ່າວຽກງານ ສິລະປະວັນນະຄະດີ ທີ່ຄິດວ່າມີແຕ່ສຸມໃສ່ຂະຫຍາຍ ເສດຖະກິດເທົ່ານັ້ນ ກໍຈະສາມາດແກ້ໄຂທຸກບັນຫາໄດ້ ຫາກບໍ່ເໜັ້ນຫ້ຽງ ແລະ ບົດບາດໃຫຍ່ ຫລວງຂອງວຽກງານວັດທະນະທຳ ສິລະປະວັນນະຄະດີ. ພະນັກງານຂອງພວກເຮົາ ຈຳນວນ ໜຶ່ງບໍ່ສະເພາະແຕ່ຖືເບົ່າວຽກງານວັດທະນະທຳເທົ່ານັ້ນ ແຕ່ຍັງບໍ່ເຫັນຄວາມສຳຄັນຂອງວຽ ກງານນ ບໍ່ເຫັນຄຸນຄ່າມໍລະດົກ ທາງດ້ານວັດທະນະທຳ ແລະ ກໍບໍ່ເຫັນກຳລັງທີ່ຍິ່ງໃຫຍ່ ຂອງ ພວກເຮົາໃນການຊຸດຄົ້ນ ແລະ ປົກປັກຮັກສາມໍລະດົກຂອງພວກເຮົາ ເຊິ່ງບົດບາດສຳຄັນ ໃນ ດ້ານນ <u>ແມ່ນວັດ</u>. ທີ່ປະຈຸບັນ ຍັງມີບົດບາດໃນດ້ານນ. ຈາກສະພາບລະຫລ່ວງກ່ວ ມັນ

ໄດ້ກໍ່ຄວາມເສຍຫາຍບໍ່ນ້ອຍ ໃຫ້ວຽກງານດ້ານນີ້ ກອງປະຊຸມໃຫຍ່ ຄັ້ງທີ 4 ໄດ້ຢໍ້າວ່າ "ລົງ ທຶນເຂົ້າໃສ່ການສ້າງຮາກຖານວັດຖຸຕັກນິກ ຂອງຂະແໜງວັດທະນະທຳໃຫ້ເໝາະສົມ ສະ ເພາະຢ່າງຍິ່ງ ແມ່ນຕ້ອງປັບປຸງ ແລະ ກໍ່ສ້າງວຽກງານຮູບເງົາ ຂະຫຍາຍວຽກງານ ພິມຈຳ ໜ່າຍ ການພິມ ແລະ ຈຳໜ່າຍປຶ້ມ ປັບປຸງ ແລະ ກໍ່ສ້າງຫໍພິພິດຕະພັນ ຫ້ອງມຸນເຊີ ແລະ ຮັກສາບູຮານ : ວັດຖຸອັນເປັນມໍລະດົກທາງດ້ານວັດທະນະທຳ ທີ່ມີຄຸນຄ່າຂອງຊາດ".

ຂໍນະມັດສະການ ພະເຖລານຸເຖລະ ແລະ ຂໍອຽນສະຫາຍເພື່ອນມິດທີ່ຮັກແພງ.

ການສຳມະນາໃບລານຂອງພວກເຮົານີ້ ນັບວ່າເປັນຄຸດທຳອິດ ພວກເຮົາຍັງບໍ່ທັນມີ ບົດຮຽນຫລາຍ ເງື່ອນໄຂໃນໂຕ ແລະນອກໂຕຂອງພວກເຮົາຍັງຈຳກັດ ແຕ່ກໍ່ເປັນການສຳມະ ນາ ຄັ້ງປະຫວັດສາດ ສຳຫລັບພວກເຮົາ ມັນເປັນການເປີດສ່ອງທາງ ໃຫ້ແກ່ການສຳຫຼວດຂຸດ ຄົ້ນ ຂຸມຄົ້ນຄຸ້ມຄອງຮັກສາ ແລະ ນຳໃຊ້ໜັງສືໃບລານໃນລາວ. ຈາກສຳມະນາທີ່ບັນດາທ່ານ ສະຫາຍ ໄດ້ດຳເນີນມານີ້ ຈະຮັດໃຫ້ພວກເຮົາ ເຫັນຄວາມສຳຄັນຂອງໜັງສືທີ່ເກົ່າແກ່ ຊຶ່ງ ມີຄຸນຄ່າອັນມະຫາສານ ພວກທ່ານສະຫາຍ ຍັງຈະໄດ້ຮູ້ຄວາມເປັນມາຂອງຕົວອັກສອນ ລາວ ຄວາມເປັນມາຂອງໃບລານລາວ ບົດບາດຂອງພະສົງໃນການຂຸດຄົ້ນ ປົກປັກຮັກສາ ແລະ ເສີມຂະຫຍາຍໜັງສືໃບລານ ໃນອະດີດຕະການ ກໍ່ຄືໃນປະຈຸບັນ. ຂ້າພະເຈົ້າ ໃນນາມ ປະ ທານຮ່ວມ ຂໍຕາງໜ້າໃຫ້ປະທານຮ່ວມໂຄງການຄື : ສ/ຫ ຄຳມ່ວນ ວິຈິດ ຫົວໜ້າ ກົມ ວັດທະນະທຳມະຫາຊົນ ແລະ ຫໍສະໝຸດແຫ່ງຊາດ ແລະ ພ້ອມກັນນັ້ນ ກໍ່ຂໍຕາງໜ້າໃຫ້ຄະນະ ຈັດຕັ້ງການສຳມະນາທຸກໆ ທ່ານ ຂໍສະແດງຄວາມຄຳນັບຮັບຕ້ອນ ບັນດາຜູ້ແທນທຸກໆທ່ານ ທີ່ ມາຮ່ວມໃນການສຳມະນາຄັ້ງນີ້ ຂໍອວຍໄຊໃຫ້ພອນ ແກ່ບັນດາທ່ານ ບັນດາສະຫາຍ ຈົ່ງມີສຸຂະ ພາບ ເຂັ້ມແຂງ.

ຂໍອວຍໄຊໃຫ້ພອນ ໃຫ້ການສຳມະນາຂອງພວກເຮົາ ຈົ່ງປະສົບຜົນສຳເລັດ ເປັນ ຢ່າງດີ ພິເສດສຸດ ຂໍສະແດງຄວາມຂອບອົກຂອບໃຈນຳທ່ານ ດ.ຣ ໂຢເນໂອະ ອິສຶ ຜູ້ອຳ ນວຍການ ຫົວເປັນສາດສະດາຈານສູນຄົ້ນຄ້ວາ ອາຊີອາຄະເນ ຂອງ ຍີ່ປຸ່ນ ທີ່ໄດ້ເສຍສະລະ ເວລາມາຮ່ວມການສຳມະນາຂອງພວກເຮົາໃນຄັ້ງນີ້ດ້ວຍ./.

ໜັງສືໃບລານ

ວິວັດທະນາການ ແລະ ການປົກປັກຮັກສາ...!

ໂດຍ : ສຳລິດ ບົວສີສະຫວັດ.

I.- ຄຳນຳ

